ການອະທິຖານ, ອົດອາຫານ ແລະ ຊໍາລະຕົນ ປີ 2023

# ການອັດສະຈັນ

## ໃຫ້ພຣະນາມຂອງພຣະເຈົ້າເປັນທີ່ຮູ້ຈັກ

# ສາລະບານ


ການກະກຽມກ່ອນອິດອາຫານ................................................................................................

ແຜນການຂອງຂ້ອຍ................................................................................................

ເປີດເລື່ອງ: ຈຸດປະສົງ ................................................................................................

ມື້ທີ 1: ອັນເພັນເຕຄໍສະເຕ................................................................................................

ມື້ທີ 2: ການຮັກສາ ................................................................................................

ມື້ທີ 3: ການຈັດຕຽມ................................................................................................

ມື້ທີ 4: ການຊິງນໍາ................................................................................................

ມື້ທີ 5: ການປົດປ່ອຍ................................................................................................

ສະຫຼຸບ: ການປົກປ້ອງ................................................................................................

# ການກະກຽມກ່ອນອົດອາຫານ

## ເປັນຫຍັງຈຶ່ງອົດອາຫານ?

ການອົດອາຫານເປັນເຄື່ອງມືຝ່າຍຈິດວິນຍານທີ່ພຣະເຈົ້າໃຊ້ເພື່ອເສີມຂະຫຍາຍອານາຈັກຂອງພຣະອົງ ແລະ ປ່ຽນຈຸດໝາຍປາຍທາງຂອງປະເທດ, ກະຕຸ້ນການຟື້ນຟູ ແລະ ນຳໄຊຊະນະມາສູ່ຊີວິດພວກເຮົາ. ຄຣິສຕະຈັກ ເອຟເອຣີ ເນເຊີນ ແລະ ພັນທະກິດໄອໜຸ່ມ ເລີ່ມຕົ້ນປີໃໝ່ດ້ວຍການອະທິຖານ ແລະ ອົດອາຫານ ເປັນເວລາ 5 ມື້ ເພື່ອຖ່ອມຕົວລົງຕໍ່ພຣະພັກພຣະເຈົ້າ, ຊໍາລະຕົນໃຫ້ສະອາດຕໍ່ໜ້າພຣະອົງ ເພື່ອກະກຽມຕ້ອນຮັບປີໃໝ່ ແລະ ໄວ້ວາງໃຈໃນການຜ່ານຜ່າທີ່ພຣະເຈົ້າຈະຊົງນໍາໃຫ້ເກີດຂຶ້ນ.

### ພຣະເຢຊູອົດອາຫານ.

> ຕໍ່ມາພຣະວິນຍານໄດ້ນໍາພຣະເຢຊູເຈົ້າເຂົ້າໄປໃນຖິ່ນແຫ້ງແລ້ງກັນດານເພື່ອໃຫ້ມານຮ້າຍທົດລອງ. ຫຼັງຈາກອົດອາຫານໄດ້ສີ່ສິບວັນສີ່ສິບຄືນແລ້ວພຣະເຢຊູເຈົ້າກໍຢາກອາຫານ. **ມັດທາຍ 4:1-2**

> ແລ້ວພຣະເຢຊູເຈົ້າກໍໄດ້ກັບຄືນມາແຂວງຄາລີເລ ດ້ວຍຣິດອຳນາດຂອງພຣະວິນຍານບໍຣິສຸດເຈົ້າ ຂ່າວເລື່ອງຂອງ ພຣະອົງໄດ້ຊ່າລືໄປທົ່ວຂົງເຂດນັ້ນ. **ລູກາ 4:14**

ພຣະເຢຊູຮູ້ວ່າພຣະອົງຕ້ອງການຄວາມເຂັ້ມແຂງຝ່າຍຈິດວິນຍານໃນການດໍາເນີນພັນທະກິດເພື່ອເຕີມເຕັມພຣະປະສົງຂອງພຣະບິດາ. ການອົດອາຫານເຮັດໃຫ້ຝ່າຍຈິດວິນຍານຂອງເຮົາເຂັ້ມແຂງ ແລະ ກະກຽມເຮົາເພື່ອເຮັດພັນທະກິດຂອງພຣະເຈົ້າ.

### ການອົດອາຫານແມ່ນສະແດງເຖິງຄວາມຖ່ອມຕົວ ແລະ ການຊໍາລະຕົນໃຫ້ສະອາດ.

ຢູ່ທີ່ນັ້ນໃກ້ຫ້ວຍອາຮາວາຂ້າພະເຈົ້າໄດ້ອອກຄໍາສັ່ງໃຫ້ທຸກຄົນຖືສິນອົດອາຫານ ແລະ ຖ່ອມຕົວລົງຕໍ່ໜ້າພຣະເຈົ້າ ຂອງພວກເຮົາ ເພື່ອຂໍໃຫ້ພຣະອົງນໍາພາໃນການເດີນທາງ ແລະ ໃຫ້ປົກປັກຮັກສາ ພວກເຮົາພ້ອມທັງລູກໆຂອງ ພວກເຮົາ ແລະ ເຄື່ອງຂອງທັງໝົດທີ່ພວກເຮົາມີຢູ່. **ເອຊະຣາ 8:21**

ເມື່ອພວກເຮົາຖ່ອມຕົວລົງດ້ວຍການອະທິຖານ ແລະ ອົດອາຫານ ເຮົາກໍຈະໄດ້ພົບພຣະຄຸນຂອງພຣະເຈົ້າ ແລະ ຫຍັບເຂົ້າໃກ້ພຣະອົງຫຼາຍຂຶ້ນ.

### ການອົດອາຫານຊ່ວຍໃຫ້ພວກເຮົາສໍາພັດເຖິງພຣະວິນຍານບໍລິສຸດ.

> ຂະນະທີ່ພວກພີ່ນ້ອງກໍາລັງນະມັດສະການອົງພຣະຜູ້ເປັນເຈົ້າ ແລະ ຖືສິນອົດອາຫານຢູ່ນັ້ນ ພຣະວິນຍານ ບໍຣິສຸດເຈົ້າໄດ້ບອກກັບພວກເພິ່ນວ່າ, "ຈົ່ງຄັດເອົາບາຣະນາບາກັບໂຊໂລໄວ້ໃຫ້ເຮົາ ສໍາລັບພາລະກິດ ທີ່ເຮົາໄດ້ເອີ້ນ ໃຫ້ພວກເຂົາເຮັດນັ້ນ." **ກິດຈະການ 13:2**

ເມື່ອເຮົາປະຕິເສດຄວາມຕ້ອງການໂດຍທໍາມະຊາດຂອງຝ່າຍໂລກ, ເຮົາກໍຈະກາຍເປັນຄົນທີ່ສາມາດ ສໍາພັດສຽງຂອງພຣະເຈົ້າໄດ້ໄວ. ແລ້ວເຮົາກໍສາມາດຈົດຈໍ່ຢູ່ທີ່ພຣະເຈົ້າ ແລະ ຍອມຈໍານົນຕໍ່ພຣະປະສົງ ຂອງພຣະອົງຫຼາຍຂຶ້ນ.

### ການອົດອາຫານນໍາມາເຖິງການຟື້ນຟູ.

> 12 ປະຊາຊົນຂອງເຈົ້າຈະສ້າງສິ່ງທີ່ຮົກຮ້າງເພພັງແຕ່ດົນນານຂຶ້ນໃໝ່ ຄືສ້າງຂຶ້ນໃໝ່ຢູ່ໃນບ່ອນທີ່ມີ ຮາກຖານເດີມ. ເຈົ້າຈະເປັນທີ່ຮູ້ຈັກໃນຖານະປະຊາຊົນ ຜູ້ທີ່ສ້າງກໍາແພງເມືອງຂຶ້ນໃໝ່ ຜູ້ທີ່ສ້າງ ບ້ານເຮືອນທີ່ຮົກຮ້າງເພພັງຂຶ້ນໃໝ່. **ເອຊາຢາ 58:12**

ປະຫວັດສາດທີ່ຜ່ານມາພຣະເຈົ້າໄດ້ນໍາເອົາການຟື້ນຟູ ແລະ ປົດປ່ອຍປະເທດອອກຈາກການທໍາລາຍ ດ້ວຍການອະທິຖານ ແລະ ອົດອາຫານ. ການອົດອາຫານຊ່ວຍໃຫ້ພວກເຮົາມີກໍາລັງໃນການອະທິຖານ ແລະ ວິງວອນຕໍ່ພຣະເຈົ້າ.

### ການອົດອາຫານເຮັດໃຫ້ມີສຸຂະພາບດີ.

ການອົດອາຫານສາມາດຊ່ວຍລ້າງລະບົບຍ່ອຍອາຫານຂອງເຮົາຈາກສານພິດ. ນອກຈາກນີ້, ແພດຍັງ ແນະນໍາວ່າ ການອົດອາຫານສາມາດປິ່ນປົວອາການແພ້ ແລະ ພະຍາດບາງຊະນິດໄດ້. ການມີວິໄນໃນ ການອົດອາຫານສາມາດທໍາລາຍພຶດຕິກໍາທີ່ບໍ່ດີໃນຊີວິດຂອງເຮົາໄດ້.

## ວາງແຜນການອົດອາຫານຂອງເຈົ້າ

> ແລ້ວໂຢຊວຍກໍໄດ້ສັ່ງປະຊາຊົນວ່າ, "ຈົ່ງຊໍາລະຕົນໃຫ້ບໍຣິສຸດ ເພາະມື້ອື່ນພຣະເຈົ້າຢາເວຈະເຮັດການ ອັດສະຈັນ ໃນທ່າມກາງພວກເຈົ້າ." **ໂຢຊວຍ 3:5**

**ອະທິຖານ** - ຈົ່ງໃຊ້ເວລາອ່ານພຣະຄໍາພີກ່ອນມື້ອົດອາຫານ. ອະທິຖານຂໍການຊີ້ນໍາຈາກພຣະວິນຍານ ບໍລິສຸດ. ຈົ່ງຂຽນເປົ້າໝາຍຄວາມເຊື່ອ ແລະ ຄໍາອະທິຖານເພື່ອຄອບຄົວ, ໝູ່ເພື່ອນ, ຄຣິສຕະຈັກ ແລະ ປະເທດຂອງເຈົ້າ.

**ປະຕິຍານຕົນ** - ອະທິຖານເລືອກປະເພດຂອງການອົດອາຫານ ແລະ ປະຕິຍານຕົນວ່າຈະເຮັດແບບນັ້ນ ກ່ອນລ່ວງໜ້າ. ຂໍພຣະຄຸນຈາກພຣະເຈົ້າເພື່ອຊ່ວຍໃຫ້ເຈົ້າເຮັດໃນສິ່ງທີ່ໄດ້ຕັດສິນໃຈໄວ້.

**ປະຕິບັດ** - ເລີ່ມຮັບປະທານອາຫານໃຫ້ໜ້ອຍລົງກ່ອນຮອດມື້ອົດອາຫານ. ຈົ່ງຫຼີກລ້ຽງອາຫານທີ່ມີທາດນ້ຳຕານ ແລະ ໄຂມັນສູງ. ຈົ່ງຊອກຫາຄູ່ອະທິຖານເພື່ອໜູນໃຈກັນ ແລະ ກັນ.

> **ໝາຍເຫດ:** ຈົ່ງປຶກສາແພດກ່ອນຖ້າເຈົ້າກຳລັງຖືພາ ຫຼື ກິນຢາປົວພະຍາດ. ຖ້າຮ່າງກາຍເຈົ້າບໍ່ພ້ອມໃນການອົດອາຫານຈົນໝົດອາທິດ, ເຈົ້າສາມາດເລືອກທາງທີ່ເໝາະສົມສຳລັບເຈົ້າໄດ້.

## ໃນລະຫວ່າງອົດອາຫານ

ຝ່າຍພຣະອົງກໍຊົງຕອບວ່າ, "ມີຄຳຂຽນໄວ້ໃນພຣະຄຳພີວ່າ 'ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານສິ່ງດຽວ, ແຕ່ລ້ຽງດ້ວຍພຣະຄຳທຸກຂໍ້ທີ່ອອກມາຈາກພຣະໂອດຂອງພຣະເຈົ້າ'. **ມັດທາຍ 4:4**

**ສຸມໃສ່** - ແບ່ງເວລາໃນການເຂົ້າເຝົ້າດ່ຽວ. ກຽມພ້ອມທີ່ຈະຕອບຮັບກັບພຣະຄຳຂອງພຣະເຈົ້າ ແລະ ການຊົງນຳຂອງພຣະວິນຍານບໍລິສຸດ.

**ອະທິຖານ** - ເຂົ້າຮ່ວມຄ່ຳຄືນແຫ່ງການອະທິຖານໃນຄຣິສຕະຈັກ. ອະທິຖານເພື່ອຄອບຄົວ, ຄຣິສຕະຈັກ, ສິດຍາພິບານ, ຊົນຊາດ, ໂຮງຮຽນ ແລະ ຜູ້ຮັບໃຊ້ ຈາກປະເທດອື່ນ ໃນຊ່ວງອົດອາຫານ.

**ເຕີມເຕັມ** - ອ່ານພຣະຄຳພີ ແລະ ອະທິຖານ. ດື່ມນ້ຳໃຫ້ຫຼາຍທີ່ສຸດ ແລະ ພັກຜ່ອນໃຫ້ພຽງພໍ. ກຽມພ້ອມທີ່ຈະຮັບມືກັບການປ່ຽນແປງຂອງຮ່າງກາຍທີ່ອ່ອນແອ ແລະ ການລົບກວນອາລົມຈິດໃຈ ບໍ່ວ່າຈະເປັນຄວາມອຶດທົນ ແລະ ອາລົມເສຍງ່າຍ.

## ການສິ້ນສຸດການອົດຫານ

ນີ້ແຫຼະເປັນຄວາມແນ່ໃຈທີ່ເຮົາທັງຫລາຍມີຢູ່ຕໍ່ພຣະອົງຄືຖ້າພວກເຮົາທູນຂໍສິ່ງໃດທີ່ເປັນຕາມນ້ຳພຣະໄທຂອງ ພຣະອົງ ພຣະອົງກໍຊົງໂຜດຟັງພວກເຮົາ. ແລະຖ້າເຮົາທັງຫຼາຍຮູ້ວ່າພຣະອົງ ຊົງໂຜດຟັງແລ້ວ ເມື່ອພວກເຮົາທູນຂໍ ສິ່ງໃດພວກເຮົາຈຶ່ງຮູ້ວ່າພວກເຮົາໄດ້ຮັບສິ່ງທີ່ພວກເຮົາ ຂໍຈາກພຣະອົງນັ້ນ. **1 ໂຢຮັນ 5:14-15**

**ກິນ** - ຫຼຸດປະລິມານອາຫານລົງເທື່ອລະໜ້ອຍ. ຮ່າງກາຍຕ້ອງການເວລາປັບຕົວໃນການອົດອາຫານ. ເລີ່ມຕົ້ນກິນໝາກໄມ້, ດື່ມນ້ຳໝາກໄມ້ ຫຼື ສະລັດ ແລະ ກິນຜັກຫຼາຍຂຶ້ນ. ກິນອາຫານໃນປະລິມານໜ້ອຍໃນແຕ່ລະຄາບ.

**ອະທິຖານ** - ຢ່າຍອມແພ້ໃນການອະທິຖານ! ໄວ້ວາງໃຈໃນຄວາມສັດຊື່ ແລະ ເວລາຂອງພຣະເຈົ້າ. ຈົ່ງເຊື່ອໝັ້ນວ່າພຣະເຈົ້າຈະຕອບຄຳອະທິຖານຂອງເຈົ້າ.

# ແຜນການອົດອາຫານຂອງຂ້ອຍ

## ມື້ທີ 1

☐ ດື່ມນ້ຳຢ່າງດຽວ ☐ ກິນຂອງເຫຼວຢ່າງດຽວ ☐ ກິນເຂົ້າຄາບດຽວ ☐ ອື່ນໆ:

☐ ເຂົ້າຮ່ວມການອະທິຖານ:

## ມື້ທີ 2

☐ ດື່ມນ້ຳຢ່າງດຽວ ☐ ກິນຂອງເຫຼວຢ່າງດຽວ ☐ ກິນເຂົ້າຄາບດຽວ ☐ ອື່ນໆ:

☐ ເຂົ້າຮ່ວມການອະທິຖານ::

## ມື້ທີ 3

☐ ດື່ມນ້ຳຢ່າງດຽວ ☐ ກິນຂອງເຫຼວຢ່າງດຽວ ☐ ກິນເຂົ້າຄາບດຽວ ☐ ອື່ນໆ:

☐ ເຂົ້າຮ່ວມການອະທິຖານ:

## ມື້ທີ 4

☐ ດື່ມນ້ຳຢ່າງດຽວ ☐ ກິນຂອງເຫຼວຢ່າງດຽວ ☐ ກິນເຂົ້າຄາບດຽວ ☐ ອື່ນໆ:

☐ ເຂົ້າຮ່ວມການອະທິຖານ:

## ມື້ທີ 5

☐ ດື່ມນ້ຳຢ່າງດຽວ ☐ ກິນຂອງເຫຼວຢ່າງດຽວ ☐ ກິນເຂົ້າຄາບດຽວ ☐ ອື່ນໆ:

☐ ເຂົ້າຮ່ວມການອະທິຖານ:

ເຮົາບອກພວກເຈົ້າອີກວ່າ, ເມື່ອໃດສອງຄົນໃນພວກເຈົ້າຮ່ວມໃຈກັນຂໍສິ່ງໃດສິ່ງໜຶ່ງເທິງແຜ່ນດິນໂລກນີ້ ພຣະບິດາເຈົ້າ ຂອງເຮົາຜູ້ຊົງສະຖິດຢູ່ໃນສະຫວັນຈະເຮັດໃຫ້ເປັນໄປຕາມນັ້ນ. **ມັດທາຍ 18:19**

**ຄູ່ຮ່ວມອະທິຖານ: ______________________________________**

# ຂ້າພະເຈົ້າຂອບຄຸນພຣະເຈົ້າສຳລັບ . . .

## ການຕອບຄຳອະທິຖານ

ຈົ່ງຂຽນຈຸດເດັ່ນ, ການຕອບຄຳອະທິຖານ ແລະ ບົດຮຽນທີ່ເຈົ້າໄດ້ຮຽນໃນປີ 2022.

# ໃນປີ 2023 ຂ້າພະເຈົ້າຈະສະແຫວງຫາ ພຣະເຈົ້າ ແລະ ໄວ້ວາງໃຈພຣະອົງສຳລັບ...

## ເປົ້າໝາຍຄວາມເຊື່ອສ່ວນຕົວ

ການຟື້ນຟູຝ່າຍຈິດວິນຍານ • ການຮັກສາຮ່າງກາຍ • ຄວາມຈະເລີນຮັ່ງມີ • ຄວາມເອື້ອເຟື້ອເພື່ອແຜ່

## ຄອບຄົວຂອງຂ້ອຍ

ການຟື້ນຟູຄວາມສຳພັນ • ຄວາມລອດພົ້ນຂອງຄອບຄົວ

## ການຮຽນ ຫຼື ອາຊີບການງານຂອງຂ້ອຍ

ຄວາມດີເລີດ • ການເລື່ອນຂັ້ນຕຳແໜ່ງ

## ອາຊີບການງານຮັບໃຊ້ຂອງຂ້ອຍ

ການເຕີບໃຫຍ່ຂອງກຸ່ມນ້ອຍ • ຄວາມລອດພົ້ນຂອງເພື່ອນຮ່ວມງານ, ໝູ່ເພື່ອນ, ທີ່ວໜ້າ

# ຂ້າພະເຈົ້າຂໍປະຕິຍານຕົນເພື່ອອະທິຖານໃຫ້...

**ຊື່** **ຄຳອະທິຖານ**

# ຂ້າພະເຈົ້າຂໍປະຕິຍານຕົນທີ່ຈະອະທິຖານເພື່ອ...

## ຄຣິສຕະຈັກຂອງຂ້ອຍ

ຜູ້ນໍາໃນຄຣິສຕະຈັກ • ການຈັດຕຽມ • ວຽກງານການສ້າງສາວົກ

## ຊຸມຊົນຂອງຂ້ອຍ

ໂຮງຮຽນ • ການຟື້ນຟູຝ່າຍຈິດວິນຍານ • ການເຕີບໂຕຂອງເສດຖະກິດ • ວຽກງານສັງຄົມ

## ປະເທດຂອງຂ້ອຍ

ອໍານາດການປົກຄອງ • ການຟື້ນຟູຝ່າຍຈິດວິນຍານ • ການເຕີບໂຕຂອງເສດຖະກິດ • ສັນຕິສຸກແລະຄວາມເປັນລະບຽບ

# ຄຳນຳ

# ຈຸດປະສົງ

### ກິດຈະການ 1: 5-8

5 ໂຢຮັນໄດ້ໃຫ້ພວກເຈົ້າຮັບບັບຕິສະມາດ້ວຍນໍ້າ, ແຕ່ໃນບໍ່ເທົ່າໃດວັນຕໍ່ໄປນີ້ ພວກເຈົ້າຈະໄດ້ຮັບ
ບັບຕິສະມາ ດ້ວຍພຣະວິນຍານບໍຣິສຸດເຈົ້າ.” 6 ເມື່ອພວກອັກຄະສາວົກມາເຕົ້າໂຮມກັນ ເພື່ອພົບ
ພຣະເຢຊູເຈົ້າ ພວກເພິ່ນຈຶ່ງຖາມພຣະອົງວ່າ, “ຂ້າແດ່ພຣະອົງເຈົ້າ ພຣະອົງຈະໃຫ້ຊົນຊາດ
ອິດສະຣາເອນໄດ້ຮັບອຳນາດຄືນໃນເວລານີ້ບໍ?” 7 ພຣະເຢຊູເຈົ້າຊົງຕອບພວກເພິ່ນວ່າ, “ບໍ່ແມ່ນໜ້າທີ່
ຂອງພວກເຈົ້າ ທີ່ຈະຮູ້ເວລາ ຫລືຍາມກຳນົດ ຊຶ່ງພຣະບິດາເຈົ້າໄດ້ຊົງຕັ້ງໄວ້ ດ້ວຍສິດຂອງພຣະອົງ
ເອງ. 8 ແຕ່ເຈົ້າທັງຫລາຍຈະໄດ້ຮັບພຣະຣາຊທານຣິດເດດ ເມື່ອພຣະວິນຍານບໍຣິສຸດເຈົ້າ ຈະສະເດັດ
ມາເທິງພວກເຈົ້າ ແລະພວກເຈົ້າຈະເປັນພະຍານໃຫ້ແກ່ເຮົາ ໃນນະຄອນເຢຣູຊາເລັມ ຕະຫລອດທົ່ວ
ແຂວງຢູດາຍ ກັບແຂວງຊາມາເຣຍ ແລະຈົນເຖິງທີ່ສຸດປາຍແຜ່ນດິນໂລກ.”

ພຣະຄຳເພີ່ມຕື່ມ: ມັດທາຍ 28:16-20; ເຢເຣມີຢາ 32:27; ລູກາ 18:27

ກິດຈະການ 1:6-11 ມັກຖືກອ້າງອີງວ່າເປັນປະໂຫຍກຫຼັກຂອງພຣະຄຳ ກິດຈະການ ທີ່ເປັນພື້ນຖານຂອງພຣະຄຳກິດຈະການທັງໝົດ. ເນື້ອຫາຫຼັກທີ່ເຫັນໃນພຣະຄຳຕອນນີ້ສືບຕໍ່ເກີດຂຶ້ນເລື້ອຍໆໃນພຣະຄຳກິດຈະການເຊັ່ນ ພຣະວິນຍານບໍລິສຸດໃຫ້ລິດອຳນາດ, ນຳພາ ແລະ ຊີ້ນຳປະຊາຊົນຂອງພຣະເຈົ້າໃນການເສີມສ້າງລາຊະອານາຈັກຂອງພຣະເຈົ້າ. ໃນ ມັດທາຍ 28, ພຣະເຢຊູໄດ້ໃຫ້ລິດອຳນາດແກ່ສາວົກຂອງພຣະອົງຜ່ານພຣະມະຫາບັນຊາວ່າ, ‘ຈົ່ງອອກໄປ ແລະ ສ້າງສາວົກ ເຮັດໃຫ້ຄົນທຸກຊົນຊາດກາຍເປັນລູກສິດ,’ ແຕ່ໃນ ກິດຈະການ 1:8 ພຣະອົງໄດ້ປະທານລິດເດດໃຫ້ກັບພວກເຂົາເພື່ອຊ່ວຍໃນການເຮັດພັນທະກິດໃຫ້ສຳເລັດ.

ໃນພຣະຄຳພີເດີມ, ພຣະວິນຍານຂອງພຣະເຈົ້າຈະມາສະຖິດກັບປະຊາຊົນຂອງພຣະອົງໃນເວລາທີ່ເຈາະຈົງເພື່ອເຮັດການອັດສະຈັນ ແລະ ກໍສະເດັດອອກຈາກຄົນນັ້ນ. ແຕ່ຫຼັງຈາກການອັດສະຈັນທີ່ພຣະເຢຊູຄຣິສໄດ້ຟື້ນຄືນພຣະຊົນໃນພຣະຄຳພີໃໝ່, ພຣະວິນຍານໄດ້ສະຖິດຢູ່ກັບສາວົກຢ່າງຖາວອນ. ພຣະວິນຍານບໍລິສຸດຖືກສົ່ງມາໃຫ້ສະຖິດຢູ່ກັບຜູ້ເຊື່ອທຸກຄົນ.

ຜ່ານຂອງປະທານຝ່າຍພຣະວິນຍານບໍລິສຸດ, ພຣະເຢຊູໄດ້ປະທານລິດເດດອຳນາດອັດສະຈັນໃຫ້ກັບສາວົກເພື່ອເປັນພິຍານ ແລະ ດຳລົງຊີວິດເພື່ອຖວາຍກຽດແດ່ພຣະອົງ.

ເລື່ອງລາວຕ່າງໆທີ່ພວກເຮົາເຫັນໃນພຣະຄໍາ ກິດຈະການ ເຕັມໄປດ້ວຍການອັດສະຈັນຫຼາຍຢ່າງ. ມີຣຽມ ເວັບສເຕີ້ ນິຍາມາ ການອັດສະຈັນແມ່ນການສຳແດງຂອງພຣະເຈົ້າໃນມະນຸດ. ພຣະເຈົ້າຍັງຊົງສຳແດງ ການອັດສະຈັນຂອງພຣະອົງຈົນເຖິງປະຈຸບັນນີ້. ພຣະອົງຍັງອະນຸຍາດໃຫ້ມີການອັດສະຈັນເພື່ອເປັນ ພິຍານຄວາມຈິງໃນການປະກາດຂ່າວປະເສີດ. ພຣະອົງສຳແດງລິດເດດຂອງພຣະອົງເພື່ອສະແດງ ຄວາມຮັກຂອງພຣະອົງແກ່ທຸກຄົນທີ່ເປັນປະຊາຊົນຂອງພຣະອົງ, ຜ່ານພວກເຂົາ ແລະ ເພື່ອຄົນທົ່ວໂລກ.

ການອັດສະຈັນມັກຈະມາກັບການເຮັດພັນທະກິດ ໃນພຣະຄໍາ ກິດຈະການ 1 ທີ່ພວກເຮົາຈະເປັນພິຍານ ໃຫ້ແກ່ພຣະອົງ, ຄວາມເມດຕາຂອງພຣະອົງ ແລະ ລິດເດດອຳນາດຂອງພຣະອົງ. ພຣະເຈົ້າຊົງສຳແດງ ການອັດສະຈັນ ເພື່ອເຮັດໃຫ້ພວກເຮົາໄດ້ຮູ້ຈັກພຣະອົງ ແລະ ເຮັດໃຫ້ນາມຊື່ຂອງພຣະອົງເປັນທີ່ຮູ້ຈັກ.

## ເຄີຍມີບໍ່ທີ່ພຣະເຈົ້າຊົງສຳແດງລິດເດດອຳນາດການອັດສະຈັນໃຫ້ເກີດຂຶ້ນໃນຊີວິດຂອງເຈົ້າ?

. . . . . . . . . . . . . . . . . . . . . . . .

. . . . . . . . . . . . . . . . . . . . . . . .

## ແບ່ງເວລາເພື່ອອະທິຖານ ແລະ ຂອບຄຸນພຣະເຈົ້າສຳລັບລິດເດດອຳນາດ ແລະ ຄວາມເມດຕາຂອງພຣະອົງ.

. . . . . . . . . . . . . . . . . . . . . . . .

. . . . . . . . . . . . . . . . . . . . . . . .

**ຂ້າແດ່ພຣະບິດາຜູ້ຊົງສະຖິດຢູ່ໃນສະຫວັນ, ຂອບຄຸນພຣະອົງທີ່ສະເດັດມາໃນ ໂລກທີ່ແຕກຫັກເພື່ອປ່ຽນໂລກນີ້ໃຫ້ດີຂຶ້ນ. ພຣະຄຳຂອງພຣະເຈົ້າເຕັມລົ້ນໄປ ດ້ວຍການອັດສະຈັນທີ່ສະແດງເຖິງຄວາມຮັກ, ລິດເດດອຳນາດ ແລະ ຄວາມເມດຕາຂອງພຣະອົງ. ຂໍໃຫ້ພຣະເຈົ້າຊົງເປີດໃຈຂອງລູກໃຫ້ເຊື່ອວາງໃຈ ໃນພຣະອົງວ່າພຣະອົງຊົງສາມາດເຮັດໄດ້ທຸກສິ່ງ. ພຣະອົງຊົງເປັນພຣະເຈົ້າທີ່ ຍິ່ງໃຫຍ່, ເຕັມລົ້ນດ້ວຍພຣະເມດຕາ ແລະ ຄູ່ຄວນແກ່ຄຳສັນເສີນ. ລູກພ້ອມທີ່ຈະ ເຫັນພຣະອົງທຳງານໃນຊີວິດຂອງລູກ ແລະ ຜ່ານຊີວິດຂອງລູກໃນອາທິດນີ້. ອະທິຖານໃນພຣະນາມຂອງພຣະເຢຊູຄຣິດ.**

**ອາແມນ.**

## ມື້ທີ 1

# ວັນເພັນເຕຄໍສະເຕ

### ກິດຈະການ 2:1-8, 14

[1] ເມື່ອເຖິງວັນເພັນເຕຄໍສະເຕ ບັນດາພີ່ນ້ອງຜູ້ທີ່ເຊື່ອທັງໝົດໃນທີ່ນັ້ນ ກໍມາເຕົ້າໂຮມກັນຢູ່ບ່ອນດຽວ. [2]
ໃນທັນໃດນັ້ນ ກໍເກີດມີສຽງໜຶ່ງດັງມາຈາກຟ້າ ເໝືອນສຽງລົມພະຍຸແຮງກ້າ ດັງກ້ອງສະໜັ່ນທົ່ວ
ເຮືອນທີ່ພວກເພິ່ນນັ່ງຢູ່ນັ້ນ. [3]ມີລີ້ນເປັນຮູບເໝືອນແປວໄຟໄດ້ປາກົດໃຫ້ພວກເພິ່ນເຫັນ ແລະ ລີ້ນນັ້ນໄດ້
ແຕກກະຈາຍອອກໄປຢູ່ເທິງພວກເພິ່ນທຸກຄົນຜູ້ລະລີ້ນ. [4] ທຸກຄົນໃນທີ່ນັ້ນ ຈຶ່ງເຕັມໄປດ້ວຍ
ພຣະວິນຍານບໍຣິສຸດເຈົ້າ ແລະ ເລີ່ມປາກພາສາຕ່າງໆ ຕາມທີ່ພຣະວິນຍານຊົງໂຜດໃຫ້ພວກເພິ່ນເວົ້າ.
[5] ຂະນະນັ້ນ ນະຄອນເຢຣູຊາເລັມມີຊາວຢິວ ຈາກທຸກໆປະເທດໃນໂລກມາພັກອາໄສຢູ່ ແລະ ຊາວຢິວ
ເຫຼົ່ານີ້ເປັນຄົນຢຳເກງພຣະເຈົ້າ. [6]ເມື່ອພວກເຂົາໄດ້ຍິນສຽງນີ້ແລ້ວ ກໍມີປະຊາຊົນມາເຕົ້າໂຮມກັນຢ່າງ
ໜາແໜ້ນ ພວກເຂົາທັງໝົດຕ່າງກໍຕື່ນເຕັ້ນປະຫລາດໃຈ ເພາະໄດ້ຍິນບັນດາຄົນເຫຼົ່ານັ້ນ ເວົ້າພາສາ
ທ້ອງຖິ່ນຂອງຕົນ. [7] ດ້ວຍຄວາມງຶດປະຫລາດໃຈ ພວກເຂົາຈຶ່ງເວົ້າກັນວ່າ, “ຄົນທີ່ເວົ້າກັນຢູ່ນີ້ ເປັນ
ຊາວຄາລີເລທັງໝົດບໍ່ແມ່ນບໍ? [8] ແຕ່ເຫດໃດ ພວກເຮົາທຸກຄົນຈຶ່ງໄດ້ຍິນພວກເຂົາເວົ້າເປັນພາສາ
ບ້ານເກີດເມືອງນອນຂອງພວກເຮົາ?

[14]ແລ້ວເປໂຕພ້ອມກັບພວກອັກຄະສາວົກສິບເອັດຄົນນັ້ນ ກໍໄດ້ຢືນຂຶ້ນ ແລະ ເພິ່ນເລີ່ມກ່າວດ້ວຍສຽງ
ດັງແກ່ປະຊາຊົນວ່າ, “ຊາວຢິວທັງຫລາຍພ້ອມກັບທຸກໆຄົນ ທີ່ມາພັກອາໄສຢູ່ໃນນະຄອນເຢຣູຊາເລັມ
ເອີຍ ຈົ່ງເຂົ້າໃຈເລື່ອງນີ້ ແລະ ໂຜດຟັງຂ້າພະເຈົ້າກ່າວໃຫ້ດີ.

### ອ່ານເພີ່ມຕື່ມ:

ກິດຈະການ 2:9-41; ອົບພະຍົບ 4: 10-12; ເອຊາຢາ 52:7; ໂຣມ 10: 14-17

ຕາມປະເພນີຂອງຊາວຢິວ, ການສະຫຼອງວັນເພັນເຕຄໍສະເຕເປັນເວລາແຫ່ງການຂອບຄຸນພຣະເຈົ້າສຳລັບຜົນລະປູກທຳອິດຂອງການເກັບກ່ຽວ. ໃນ ກິດຈະການ 2, ສາວົກທັງຫຼາຍກໍໄດ້ມາຮ່ວມສະເຫຼີມສະຫຼອງຜົນລະປູກທຳອິດ ຂອງການເກັບກ່ຽວທີ່ແຕກຕ່າງກັນໃນວັນເພັນເຕຄໍສະເຕກໍຄືການເກັບກ່ຽວຂອງຜູ້ຄົນທີ່ຕອບຮັບຕໍ່ຂ່າວປະເສີດ.

ພຣະເຢຊູກ່າວກັບສາວົກ ຢູ່ ກິດຈະການ 1 ວ່າພວກເຂົາຈະເປັນພິຍານຂອງພຣະອົງຈົນເຖິງທີ່ສຸດປາຍແຜ່ນດິນໂລກ ແລະ ໃນກິດຈະການ 2 ພຣະເຢຊູກໍໄດ້ປະທານພຣະວິນຍານບໍຣິສຸດໃຫ້ແກ່ພວກເຂົາດ້ວຍລິດເດດເພື່ອເປັນພິຍານ ແລະ ພຣະວິນຍານບໍລິສຸດຍັງຈໍາເປັນໃນການເຕີມເຕັມພຣະປະສົງຂອງພຣະເຈົ້າທີ່ພຣະອົງຊົງເອີ້ນ.

ພຣະວິນຍານບໍລິສຸດເປັນຂອງປະທານທີ່ມາຈາກພຣະເຈົ້າ, ພຣະອົງຊົງປະທັບຢູ່ກັບຜູ້ເຊື່ອ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ກັບຜູ້ເຊື່ອ ບໍ່ພຽງແຕ່ໃຫ້ເຮົາດໍາລົງຊີວິດຄຣິສຕຽນເທົ່ານັ້ນ, ແຕ່ຍັງໃຫ້ເຮົາສໍາແດງການອັດສະຈັນຂອງພຣະເຈົ້າອີກດ້ວຍ. ໝາຍສໍາຄັນ ແລະ ການອັດສະຈັນແຕ່ລະອັນທີ່ພຣະວິນຍານບໍລິສຸດໄດ້ເຮັດໂດຍຜ່ານຜູ້ເຊື່ອນັ້ນ ໄດ້ນໍາເຮົາກັບຄືນໄປເບິ່ງການອັດສະຈັນຂອງຊີວິດ, ການຕາຍ ແລະ ການຟື້ນຄືນພຣະຊົນຂອງພຣະເຢຊູຄຣິສ.

ເມື່ອເຮົາກັບໄປເບິ່ງພຣະມະຫາບັນຊາຂອງພຣະເຈົ້າຄືນ, ພຣະເຢຊູໄດ້ສັ່ງໃຫ້ສາວົກຂອງພຣະອົງ ຈົ່ງອອກໄປເຮັດໃຫ້ທຸກຊົນຊາດກາຍເປັນສາວົກຂອງພຣະອົງ. ມັນເບິ່ງຄືວ່າຈະເປັນໄປບໍ່ໄດ້, ແຕ່ຖ້າເຮົາເພິ່ງພາລິດອໍານາດຂອງພຣະເຈົ້າ ດ້ວຍຄວາມເຊື່ອ ແລະ ການເຊື່ອຟັງແລ້ວ, ພຣະວິນຍານບໍລິສຸດກໍຈະໃຫ້ລິດອໍານາດແກ່ເຮົາ ທີ່ຈະເຮັດໃນສິ່ງທີ່ເຮົາເຮັດບໍ່ໄດ້. ໃນວັນເພັນເຕຄໍສະເຕ, ສາວົກຂອງພຣະເຈົ້າກໍໄດ້ຮັບຂອງປະທານນັ້ນ.

ສິ່ງທີ່ເຮົາເຫັນໃນຕອນຕົ້ນ ພຣະຄໍາກິດຈະການ 2 ແມ່ນການອັດສະຈັນທີ່ເກີດຂຶ້ນ. ພຣະວິນຍານບໍລິສຸດໄດ້ສະເດັດ ລົງມາເທິງສາວົກ ແລະ ພວກເຂົາກໍເລີ່ມຕົ້ນເວົ້າພາສາແປກໆ (ພາສາໃໝ່) ທີ່ທຸກຄົນໃນທີ່ນັ້ນສາມາດໄດ້ຍິນຂ່າວປະເສີດ. ປະຊາຊົນຫຼາຍຄົນກໍປະຫຼາດໃຈທີ່ໄດ້ຍິນຄົນເວົ້າພາສາທ້ອງຖິ່ນຂອງພວກເຂົາເຊິ່ງເປັນ "ພາລະກິດອັນຍິ່ງໃຫຍ່ທີ່ພຣະເຈົ້າໄດ້ກະທໍາ." (ກິດຈະການ 2:11) ແລະ ກໍມີບາງຄົນແປກໃຈໃນສິ່ງທີ່ເກີດຂຶ້ນ ແລະ ບໍ່ຢາກເຊື່ອໃນສິ່ງທີ່ໄດ້ຍິນກໍຕາມ, ພຣະເຈົ້າຍັງໃຫ້ ເປໂຕ ສາມາດເທດສະໜາຢ່າງມີປະສິດທິພາບ ແລະ ຜ່ານການເທດສະໜານັ້ນ ເຮັດໃຫ້ມີຄົນກັບໃຈໃໝ່ ແລະ ຮັບເອົາຂ່າວປະເສີດຂອງພຣະອົງເພີ່ມຂຶ້ນ 3,000ຄົນ!

ການຊົງສະຖິດຢູ່ ແລະ ການປະທານລິດອໍານາດຂອງພຣະວິນຍານບໍລິສຸດຍັງເປັນຂອງປະທານແບບດຽວທີ່ເຮົາສາມາດໄດ້ຮັບໃນມື້ນີ້. ແຕ່ຂອງປະທານນີ້ບໍ່ໄດ້ມີໄວ້ສໍາລັບເຮົາເທົ່ານັ້ນ. ແຕ່ຍັງມີໄວ້ໃຫ້ທຸກຄົນໃນໂລກນີ້ຈະໄດ້ມາຮູ້ຈັກພຣະເຈົ້າອົງທ່ຽງແທ້ເຊັ່ນກັນ. ພຣະເຈົ້າໄດ້ເຮັດໃຫ້ເຮົາສາມາດແບ່ງປັນຂ່າວປະເສີດຢ່າງຖືກຕ້ອງ ແລະ ດ້ວຍຄວາມກ້າຫານໄດ້.

ພຣະມະຫາບັນຊາຂອງພຣະເຈົ້າອາດຈະເຮັດໃຫ້ເຮົາຮູ້ສຶກວ່າ ເຮົາຍັງບໍ່ພ້ອມ ຫຼື ຍັງບໍ່ຜ່ານມາດຕະຖານນັກປະກາດຂອງ ພຣະອົງເທື່ອ ແຕ່ພຣະເຈົ້າບໍ່ໄດ້ສົ່ງເຮົາອອກໄປເຮັດພັນທະກິດຂອງພຣະອົງໂດຍບໍ່ມີຜູ້ຊ່ວຍ. ພຣະອົງຈະສົ່ງພຣະວິນຍານບໍລິສຸດຂອງພຣະອົງມາເພື່ອເປັນຜູ້ຊ່ວຍ ແລະ ສອນເຮົາໃນ

ການປະກາດ. ຜ່ານຂອງປະທານນີ້, ພຣະເຈົ້າສາມາດສົ່ງເຮົາອອກໄປດ້ວຍຄວາມອັດສະຈັນເພື່ອເສີມຂະຫຍາຍຣາຊອານາຈັກຂອງພຣະອົງໄດ້.

**ເຈົ້າເຄີຍມີປະສົບການໄດ້ສຳພັດກັບພຣະວິນຍານບໍລິສຸດແລ້ວບໍ່? ຄັ້ງລ່າສຸດທີ່ພຣະເຈົ້າເຕີມເຕັມເຈົ້າດ້ວຍພຣະວິນຍານຂອງພະອົງແມ່ນຕອນໃດ?**

. . . . . . . . . . . . . . . . . . . . . . . . .

. . . . . . . . . . . . . . . . . . . . . . . . .

**ການເພິ່ງພາພຣະວິນຍານບໍລິສຸດໄດ້ປ່ຽນແປງວິທີປະກາດຂ່າວປະເສີດຂອງເຈົ້າແນວໃດ?**

. . . . . . . . . . . . . . . . . . . . . . . . .

. . . . . . . . . . . . . . . . . . . . . . . . .

ພຣະເຈົ້າ, ຂອບຄຸນພຣະອົງສຳລັບຂອງປະທານແຫ່ງພຣະວິນຍານບໍລິສຸດ. ລູກຍິນດີຕ້ອນຮັບພຣະອົງເຂົ້າມາໃນຊີວິດດ້ວຍຄວາມເຊື່ອ ແລະ ຄວາມຄາດຫວັງ. ຂອບຄຸນສຳລັບລິດອຳນາດຂອງພຣະອົງທີ່ເຮັດໃຫ້ລູກໃຊ້ຊີວິດທີ່ເກີດດອກອອກຜົນ ດ້ວຍຄວາມກ້າຫານ ແລະ ຄວາມຈິງໃຈ. ລູກຂໍຮັບເອົາການຊົງເອີ້ນຂອງພຣະອົງເພື່ອນຳເອົາຂ່າວປະເສີດໄປປະກາດໃຫ້ເພື່ອນບ້ານ ແລະ ຄົນອື່ນໃນທຸກບ່ອນທີ່ລູກໄປ. ລູກຮູ້ວ່າພຣະອົງສະຖິດຢູ່ກັບລູກ. ຂໍໃຫ້ພຣະອົງສຳແດງໃຫ້ລູກເຫັນການໃຊ້ຊີວິດແບບຜູ້ປະກາດພຣະຄຳເພື່ອໃຫ້ຄົນອື່ນໄດ້ມາຮູ້ຈັກພຣະຄຸນ ແລະ ຄວາມດີຂອງພຣະອົງດ້ວຍ. ອະທິຖານໃນນາມພຣະເຢຊູຄຣິສ, ອາແມນ.

# ມື້ທີ 2

# ການຮັກສາ

## ກິດຈະການ 3:10

1 “ວັນໜຶ່ງເປໂຕກັບໂຢຮັນໄດ້ຂຶ້ນໄປທີ່ພຣະວິຫານໃນຕອນບ່າຍສາມໂມງ ເພາະເປັນເວລາພາວັນນາ
ອະທິຖານ. 2 ທາງເຂົ້າພຣະວິຫານມີຊື່ວ່າປະຕູງາມ ມີຊາຍຜູ້ໜຶ່ງເປັນຄົນເປ້ຍມາແຕ່ເກີດ, ແຕ່ລະວັນ
ລາວໄດ້ຖືກຫາມມາວາງໄວ້ທີ່ນັ້ນເພື່ອຂໍທານນຳຄົນທີ່ເຂົ້າໄປໃນພຣະວິຫານ. 3 ເມື່ອລາວເຫັນເປໂຕກັບ
ໂຢຮັນກຳລັງເຂົ້າມາ ລາວຈຶ່ງຂໍທານນຳສອງຄົນນີ້. 4 ເປໂຕ ແລະ ໂຢຮັນໄດ້ຈ້ອງຕາເບິ່ງລາວ ແລະ
ເປໂຕກໍກ່າວວ່າ, “ຈົ່ງເບິ່ງພວກເຮົາ.” 5 ດັ່ງນັ້ນລາວຈຶ່ງເບິ່ງເປໂຕ ແລະ ໂຢຮັນໂດຍນຶກວ່າຕົນຈະໄດ້ຮັບ
ສິ່ງໃດສິ່ງໜຶ່ງຈາກທ່ານທັງສອງ. 6 ຝ່າຍເປໂຕກໍກ່າວແກ່ລາວວ່າ, “ເງິນ ແລະ ຄຳເຮົາບໍ່ມີ ແຕ່ສິ່ງທີ່
ເຮົາມີຢູ່ນັ້ນເຮົາຈະໃຫ້ແກ່ເຈົ້າຄື ໃນພຣະນາມແຫ່ງພຣະເຢຊູຄຣິສເຈົ້າໄທນາຊາເຣັດ ຈົ່ງຍ່າງໄປ.” 7
ແລ້ວເປໂຕກໍຈັບມືຂວາຂອງຊາຍຄົນນັ້ນດຶງຂຶ້ນ ໃນທັນໃດນັ້ນຕີນ ແລະ ຂໍ່ຕີນຂອງລາວກໍມີແຮງມາ, 8
ລາວໂດດຢືນຂຶ້ນ ແລະ ເລີ່ມຕົ້ນຍ່າງໄປມາແລ້ວລາວກໍເຂົ້າໄປໃນພຣະວິຫານພ້ອມກັບທ່ານທັງສອງ
ທັງຍ່າງທັງເຕັ້ນ ແລະ ທັງສັນລະເສີນພຣະເຈົ້າ. 9 ປະຊາຊົນທັງຫລາຍຊຶ່ງຢູ່ໃນທີ່ນັ້ນ ໄດ້ເຫັນລາວ
ຍ່າງໄປມາ ແລະ ສັນລະເສີນພຣະເຈົ້າ 10 ຈຶ່ງຈື່ໄດ້ວ່າລາວເປັນຄົນເປ້ຍທີ່ເຄີຍນັ່ງຂໍທານທີ່ປະຕູງາມ
ທຸກຄົນຕ່າງກໍງຶດປະຫຼາດອັດສະຈັນໃຈໃນເຫດການທີ່ ເກີດຂຶ້ນກັບຄົນນີ້.

### ອ່ານເພີ່ມຕື່ມ:

### ລູກາ 5:17-26; ຢາໂກໂບ 5:14-15; ເຢເຣມີຢາ 17:14

ເມື່ອເຮົາອ່ານຂໍ້ພຣະຄຳແບບນີ້ໃນພຣະຄຳພີ, ເຮົາສາມາດເຂົ້າໃຈງ່າຍຖ້າວ່າເບິ່ງຈາກມຸມຂອງສາວົກ, ແຕ່ເລື່ອງລາວຈະປ່ຽນໄປແນວໃດຖ້າເຮົາອ່ານຈາກມຸມມອງຂອງຄົນຂໍທານ?

ເປັນເວລາຫຼາຍປີຄົນຂໍທານຖືກຫາມມາໄວ້ທີ່ປະຕູງາມເພື່ອນັ່ງຂໍທານ. ຍ້ອນລາວບໍ່ສາມາດເຮັດວຽກໄດ້, ການຂໍທານຈຶ່ງເປັນວິທີດຽວທີ່ຈະຊ່ວຍໃຫ້ລາວຢູ່ລອດໄດ້. ຕອນນັ້ນມີກົດໝາຍຫ້າມບໍ່ໃຫ້ “ຄົນທີ່ມີມົນທິນ ຫຼື ຄົນບໍ່ສະອາດ” ເຂົ້າໄປໃນວິພຣະຫານຢ່າງເດັດຂາດ. ຄົນຂໍທານຈຶ່ງສາມາດຢູ່ແຕ່ປະຕູທາງເຂົ້າພຣະວິຫານໄດ້.

ລອງຄິດເບິ່ງຖ້າເຈົ້າເປັນຄົນຂໍທານເຈົ້າຈະຄິດກັບພຣະເຈົ້າແນວໃດ. ພຣະເຈົ້າມີຈິງແທ້ບໍ່? ພຣະເຈົ້າເຫັນຂ້ອຍຢູ່ບໍ່? ພຣະເຈົ້າສົນໃຈຂ້ອຍບໍ່? ພຣະອົງສາມາດປ່ຽນແປງສະຖານະການຂອງຂ້ອຍໄດ້ບໍ່ຖ້າພຣະອົງ

ຕ້ອງການ? ສຳລັບຄົນເປ້ຍມາແຕ່ເກີດຜູ້ນີ້ ແຕ່ລະມື້ຂອງລາວບໍ່ມີຫຍັງປ່ຽນແປງ. ຈົນກວ່າມື້ໜຶ່ງລາວໄດ້ພົບກັບສາວົກຂອງພຣະເຢຊູ, ທຸກສິ່ງທຸກຢ່າງກໍ່ປ່ຽນແປງໄປ.

"ຈົ່ງເບິ່ງພວກເຮົາ," ຄົນຂໍທານໄດ້ຍິນເປໂຕ ແລະ ໂຢຮັນກຳລັງລົມກັບລາວ. ລາວອາດຈະຄິດວ່າພວກເຂົົາກຳລັງຈະເອົາເງິນໃຫ້ລາວ, ແຕ່ລາວບໍ່ຮູ້ດອກວ່າລາວກຳລັງຈະໄດ້ຮັບສິ່ງທີ່ດີກວ່າ. ເປໂຕບອກລາວວ່າ, "ເງິນ ແລະ ຄຳເຮົາບໍ່ມີ ແຕ່ສິ່ງທີ່ເຮົາມີຢູ່ນັ້ນເຮົາຈະໃຫ້ແກ່ເຈົ້າຄື ໃນພຣະນາມແຫ່ງພຣະເຢຊູຄຣິສເຈົ້າໄທນາຊາເຣັດ ຈົ່ງຍ່າງໄປ." (ກິດຈະການ 3:6)

ຍ້ອນການສຳພັດຂອງພຣະເຈົ້າ, ຄົນຂໍທານຈຶ່ງໄດ້ຮັບການປິ່ນປົວ! ການອັດສະຈັນນີ້ເປັນຫຼາຍກວ່າການປິ່ນປົວທາງຮ່າງກາຍຂອງລາວ. ການປິ່ນປົວທາງຮ່າງກາຍຂອງລາວເຮັດໃຫ້ລາວຄວາມສາມາດຍ່າງ, ເຕັ້ນ, ທັງສັນລະເສີນພຣະເຈົ້າ ແລະ ເຂົ້າໄປໃນ ພຣະວິຫານ ທີ່ເມື່ອກ່ອນລາວບໍ່ສາມາດເຂົ້າໄປໃນໄດ້. ຫຼາຍກວ່ານັ້ນ, ມັນໄດ້ເຮັດໃຫ້ລາວ ແລະ ຄົນອື່ນຮູ້ວ່າພຣະເຈົ້າບໍ່ພຽງແຕ່ມີລິດອຳນາດ, ແຕ່ພຣະອົງຍັງຊົງແສນດີ. ພຣະອົງບໍ່ເຄີຍລືມລູກຂອງພຣະອົງ. ພຣະອົງເຂົ້າມາໃນຊີວິດເຮົາເພື່ອນຳເອົາແຜ່ນດິນສະຫວັນມາຕັ້ງຢູ່ເທິງໂລກນີ້.

ຄົນທີ່ຈື່ຄົນຂໍທານແລະເຫັນການອັດສະຈັນກໍເຕັມໄປດ້ວຍຄວາມງຶດງໍ້ແລະປະຫຼາດໃຈ ແລະນັ້ນເປັນພຽງການເລີ່ມຕົ້ນ. ການອັດສະຈັນນັ້ນໄດ້ເປີດທາງໃຫ້ເປໂຕໄດ້ປະກາດຂ່າວປະເສີດໃຫ້ອີກຫຼາຍຄົນ ເຮັດໃຫ້ມີຫຼາຍກວ່າ 5,000 ຄົນ ໄດ້ຮັບເຊື່ອແລະເພີ່ມເຂົ້າໃນຄຣິສຕະຈັກ. (ກິດຈະການ 4:4)

ດັ່ງທີ່ພວກເຮົາໄດ້ເຫັນໃນເລື່ອງນີ້ແລ້ວວ່າຜົນຂອງການອັດສະຈັນແມ່ນການເປີດເຜີຍຂອງພຣະເຈົ້າເອງເພື່ອໃຫ້ໂລກຮູ້ວ່າພຣະອົງແມ່ນໃຜ.

## ຈົ່ງທວນຄືນເຖິງຊ່ວງເວລາທີ່ເຈົ້າ ຫຼື ຄົນທີ່ເຈົ້າຮູ້ຈັກໄດ້ຮັບການຮັກສາຢ່າງອັດສະຈັນ.

. . . . . . . . . . . . . . . . . . . . . . . . . .

. . . . . . . . . . . . . . . . . . . . . . . . . .

## ສິ່ງໃດທີ່ກຳລັງຂັດຂວາງເຈົ້າບໍ່ໃຫ້ອະທິຖານເພື່ອການຮັກສາທາງຮ່າງກາຍໃຫ້ກັບຄົນອື່ນ?

. . . . . . . . . . . . . . . . . . . . . . . . . .

. . . . . . . . . . . . . . . . . . . . . . . . . .

# ມື້ທີ 3

# ການຈັດຕຽມ

## ກິດຈະການ 4:32-37

32 ຄົນທັງຫລາຍທີ່ເຊື່ອນັ້ນ ກໍເປັນນໍ້າໜຶ່ງໃຈດຽວກັນ ແລະ ບໍ່ມີຜູ້ໃດຈັກຄົນ ອ້າງວ່າສິ່ງຂອງທີ່ຕົນມີຢູ່
ນັ້ນເປັນຂອງສ່ວນຕົວ, ແຕ່ຖືວ່າສິ່ງຂອງທັງໝົດເປັນຂອງກາງ. 33 ຝ່າຍພວກອັກຄະສາວົກໄດ້ເຕັມໄປ
ດ້ວຍຣິດເດດອັນຍິ່ງໃຫຍ່ ແລະໄດ້ເປັນພະຍານເຖິງຄວາມເປັນຄືນມາຈາກຕາຍຂອງອົງພຣະເຢຊູເຈົ້າ
ແລະ ກໍໄດ້ຖອກເທພຣະຄຸນອັນໃຫຍ່ຂອງພຣະອົງ ລົງເທິງພວກເຂົາທຸກຄົນ. 34 ໃນກຸ່ມຄົນທີ່ເຊື່ອບໍ່ມີ
ຈັກຄົນຂັດສົນ ບຸກຄົນໃດມີດິນນາ ຫຼືມີເຮືອນຫຼາຍຫຼັງກໍໄດ້ຂາຍ ແລະ ນໍາເອົາເງິນທີ່ໄດ້ຈາກການຂາຍ
ນັ້ນ 35 ມາມອບໃຫ້ພວກອັກຄະສາວົກ ແລະ ເພິ່ນກໍແຈກຢາຍເງິນນັ້ນໃຫ້ແຕ່ລະຄົນ ຕາມຄວາມ
ຈໍາເປັນຂອງໃຜລາວ. 36 ໄດ້ມີຊາຍເລວີຜູ້ໜຶ່ງເປັນຄົນພື້ນເມືອງໃນເກາະໄຊປຣັດ ຊື່ວ່າ ໂຢເຊັບ ພວກ
ອັກຄະສາວົກເອີ້ນລາວວ່າ ບາຣະນາບາ (ຊຶ່ງໝາຍຄວາມວ່າ ຜູ້ມີໃຈອຸດໜູນ) 37 ລາວໄດ້ຂາຍນາຂອງ
ຕົນທີ່ງໜຶ່ງ ແລະ ນໍາເອົາເງິນມາມອບໃຫ້ແກ່ພວກອັກຄະສາວົກ.

### ອ່ານເພີ່ມຕື່ມ:

ລູກາ 12:22-31; ອົບພະຍົບ 16:4-16; ຟີລິບປອຍ 4:18-19; 2 ໂກຣິນໂທ 9:6-8

ການອັດສະຈັນຂອງການຈັດຕຽມແມ່ນມີຢູ່ໃນພຣະຄໍາພີເດີມຈົນເຖິງພຣະຄໍາພີໃໝ່, ເລີ່ມຕົ້ນຈາກມານາ ໃນຖິ່ນແຫ້ງແລ້ງກັນດານ (ອົບພະຍົບ 16:15) ຈົນເຖິງເງິນຫຼຽນຢູ່ໃນປາກຂອງປາ (ມັດທາຍ 17:27). ຄວາມຈິງ, ພຣະເຢຊູໄດ້ສອນພວກເຮົາໃຫ້ອະທິຖານ ແລະ ເພິ່ງພາອາໄສພຣະເຈົ້າເພື່ອການຈັດຕຽມໃນ ຊີວິດປະຈໍາວັນຂອງພວກເຮົາ (ລູກາ 11:3).

ເມື່ອພວກເຮົາເຊື່ອໝົດໃຈວ່າພຣະເຈົ້າເປັນຜູ້ຈັດຕຽມຂອງເຮົາ, ມັນງ່າຍທີ່ເຮົາຈະຖວາຍ ຫຼື ອວຍພອນ ຄົນອື່ນສະເໝີ.

ເມື່ອເຮົາເຕີບໂຕໃນການເປັນຜູ້ເຊື່ອ, ຄວາມເຂົ້າໃຈສໍາລັບຊັບສິນຂອງເຮົາກໍປ່ຽນໄປ. ແທນທີ່ຈະເບິ່ງວ່າສິ່ງ ທີ່ເຮົາມີແມ່ນສິ່ງທີ່ເຮົາຫາມາໄດ້ ຫຼື ສົມຄວນໄດ້ຮັບ, ເຮົາກໍຈະເຫັນວ່າແມ່ນພຣະເຈົ້າຊົງເປັນຜູ້ປະທານ ຊັບສິນ ແລະ ເງິນຄໍາໃຫ້ແກ່ເຮົາເພື່ອເປັນຜູ້ເບິ່ງແຍງ. ພຣະອົງປະທານຕາມຄວາມຈໍາເປັນຂອງເຮົາ ເພື່ອ ໃຫ້ເຮົາສາມາດເປັນພຣະພອນ ແລະ ຊ່ວຍເຫຼືອຄົນອື່ນໃນສິ່ງທີ່ເຂົາຈໍາເປັນເຊັ່ນກັນ. ທຸກສິ່ງທີ່ເຮົາໄດ້ຮັບ

ຈາກພຣະເຈົ້າບໍ່ແມ່ນສະເພາະແຕ່ເຮົາເອງ ແຕ່ແມ່ນສຳລັບຄົນອື່ນ ແລະ ສະມາຊິກຄອບຄົວຂອງພຣະເຈົ້ານຳ.

ໃນຄອບຄົວ, ບໍ່ວ່າສິ່ງໃດກໍຕາມກໍກາຍເປັນຂອງສ່ວນລວມໝົດ. ແນ່ນອນ, ເຮົາອາດຈະບໍ່ໄດ້ໃຊ້ແປງຖູແຂ້ວ ຫຼື ຖົງຕີນຮ່ວມກັນ, ແຕ່ມັນຫາຍາກທີ່ຈະເຫັນອ້າຍນ້ອງຕົນເອງເປັນເຈົ້າຂອງໂຊຟາ ແລະ ອີກຜູ້ໜຶ່ງເປັນເຈົ້າຂອງຕັ່ງ ຫຼືວ່າ ພໍ່ແມ່ຈະບອກລູກໃຫ້ຂໍອະນຸຍາດເພິ່ນກ່ອນ ຈຶ່ງສາມາດໃຊ້ໂຕະກິນເຂົ້າໄດ້. ສະມາຊິກໃນຄອບຄົວຈະໃຊ້ສິ່ງຂອງຮ່ວມກັນ ມັນກໍຄ້າຍຄືກັບຜູ້ທີ່ເຊື່ອໃນພຣະຄຳພີ ກິດຈະການ 4.

ການອັດສະຈັນໃນພຣະຄຳຂໍ້ນີ້, ທີ່ກ່າວວ່າ ບໍ່ມີຄົນຂັດສົນໃນບັນດາພວກເຂົາ (ກິດຈະການ 4:34), ມັນເບິ່ງບໍ່ປົກກະຕິ. ມັນບໍ່ມີລົມພັດແຮງ, ບໍ່ມີທູດສະຫວັນ, ບໍ່ມີການສັ່ນສະເທືອນໃນທີ່ປະຊຸມ, ແຕ່ໃນຄວາມຮູ້ສຶກ, ນັ້ນມັນເປັນສິ່ງທີ່ພິເສດຫຼາຍ. ຄວາມເອື້ອເຟື້ອເພື່ອແຜ່ນີ້ເຮັດໃຫ້ພວກເຂົາໂດດເດັ່ນໃນທ່າມກາງວັດທະນະທຳທີ່ຢູ່ອ້ອມຂ້າງພວກເຂົາ — ໃນເມືອງທີ່ການແບ່ງປັນສຳລັບຄົນອື່ນບໍ່ເປັນເລື່ອງປົກກະຕິ, ຄວາມເອື້ອເຟື້ອເພື່ອແຜ່ຂອງພວກເຂົາແມ່ນສະແດງໃຫ້ເຫັນເຖິງຄວາມຮັກອັນອັດສະຈັນ ແລະ ການຈັດຕຽມທີ່ເຕັມໄປດ້ວຍລິດອຳນາດຂອງພຣະຄຣິດ.

ເຮົາແຕ່ລະຄົນສາມາດສ້າງສະພາບແວດລ້ອມແບບນີ້ໄດ້ ເມື່ອການດຳລົງຊີວິດຂອງເຮົາເຕັມໄປດ້ວຍພຣະວິນຍານບໍລິສຸດ. ຜົນຂອງພຣະຄຸນຂອງພຣະເຈົ້າທີ່ສະຖິດຢູ່ກັບ Òພວກເຈົ້າÓ (ກິດຈະການ 4:33) ແມ່ນຄວາມເອື້ອເຟື້ອເພື່ອແຜ່ອັນແຮງກ້າ ແລະ ຍິ່ງໃຫຍ່. ພຣະເຈົ້າຈະປະທານການຈັດຕຽມອັນອັດສະຈັນເພື່ອສະໜອງຄວາມຈຳເປັນຂອງເຮົາ, ຂອງຄົນອື່ນ ແລະ ເພື່ອການເສີມສ້າງຣາຊອານາຈັກຂອງພຣະເຈົ້າ.

## ເຄີຍມີເວລາໃດທີ່ເຈົ້າໄດ້ພົບການຈັດຕຽມອັນອັດສະຈັນຂອງພຣະເຈົ້າໃນຊີວິດເຈົ້າບໍ່? ປະສົບການນັ້ນເປັນແນວໃດ?

. . . . . . . . . . . . . . . . . . . . . . . . .

. . . . . . . . . . . . . . . . . . . . . . . . .

## ຖ້າເຈົ້າໝັ້ນໃຈວ່າພຣະເຈົ້າສາມາດຈັດຕຽມທຸກສິ່ງທີ່ເຈົ້າຈຳໃຫ້ແກ່ເຈົ້າໄດ້, ການໃຊ້ຊີວິດປະຈຳວັນຂອງເຈົ້າຈະແຕກຕ່າງແນວໃດ?

. . . . . . . . . . . . . . . . . . . . . . . . .

. . . . . . . . . . . . . . . . . . . . . . . . .

ບາດກ້າວຄວາມເຊື່ອ

ເຈົ້າຮູ້ຈັກໃຜບໍ່ທີ່ຕົກຢູ່ໃນສະຖານະການທີ່ຫຍຸ້ງຍາກ ແລະ ຕ້ອງການຄວາມຊ່ວຍເຫຼືອ?

ອະທິຖານຂໍໃຫ້ພຣະເຈົ້າໃຊ້ເຈົ້າໃຫ້ເປັນສ່ວນໜຶ່ງໃນການຈັດຕຽມອັນອັດສະຈັນໃຫ້ແກ່ຄົນນັ້ນ.

ພຣະເຢຊູ, ພຣະອົງຊົງເປັນຜູ້ຈັດຕຽມທີ່ຍິ່ງໃຫຍ່ສະເໝີສຳລັບລູກ: ພຣະອົງຊົງເປັນພຣະຜູ້ໄຖ່ທີ່ຊ່ວຍລູກໄດ້ຢູ່ສະເໝີ. ຂໍພຣະອົງຊົງມອບຄວາມເຂັ້ມແຂງໃຫ້ລູກທີ່ຈະໄວ້ວາງໃຈໃນການຈັດຕຽມຂອງພຣະອົງສຳລັບທຸກສິ່ງໃນຊີວິດລູກດ້ວຍ. ພຣະອົງໄດ້ປະທານພຣະພອນໃຫ້ລູກເພື່ອໃຫ້ລູກເປັນພຣະພອນໃຫ້ແກ່ຄົນອື່ນ ແລະ ນຳພາຄົນອື່ນມາພົບກັບພຣະຄຸນຂອງພຣະເຈົ້າ. ຂໍໃຫ້ພຣະສະຫງ່າລາສີຂອງພຣະອົງຖືກເປີດເຜີຍຜ່ານການຈັດຕຽມທີ່ພຣະອົງຈະປະທານໃຫ້ແກ່ລູກ ແລະ ຜ່ານຕົວລູກໄປສູ່ຄົນອື່ນດ້ວຍ. ອາແມນ

# ມື້ທີ 4

# ການຊີ້ນຳ

## ກິດຈະການ 8:26-31, 35-39

[26] ແລ້ວເທວະດາຕົນໜຶ່ງຂອງອົງພຣະຜູ້ເປັນເຈົ້າໄດ້ສັ່ງຟີລິບວ່າ, “ຈົ່ງລຸກຂຶ້ນຕຽມຕົວໃຫ້ພ້ອມ ແລະ
ໄປທາງທິດໃຕ້ ຕາມທາງແຕ່ນະຄອນເຢຣູຊາເລັມລົງໄປສູ່ກາຊາ. (ຫົນທາງນີ້ຄົນບໍ່ທຽວກັນແລ້ວ.) [27]
ດັ່ງນັ້ນ ທ່ານຈຶ່ງລຸກຂຶ້ນເດີນທາງໄປ ແລະ ເບິ່ງແມ! ມີໄທເອທິໂອເປຍຄົນໜຶ່ງເປັນກະເທີຍ ເປັນຂ້າ
ຣາຊການຊັ້ນສູງຂອງກັນເດກາ ຄືຣາຊີນີຂອງຊາວເອທິໂອເປຍ ເປັນນາຍຄັງຊັບທັງໝົດຂອງຣາຊີນີ
ເພິ່ນໄດ້ມາທີ່ນະຄອນເຢຣູຊາເລັມເພື່ອນະມັດສະການ. [28] ຂະນະທີ່ນັ່ງລົດມ້າກຳລັງກັບເມືອ ເພິ່ນໄດ້
ອ່ານໜັງສືຂອງຜູ້ທຳນວາຍເອຊາຢາຢູ່. [28]ພຣະວິນຍານບໍຣິສຸດເຈົ້າຊົງສັ່ງແກ່ຟີລິບວ່າ, “ຈົ່ງຫຍັບເຂົ້າ
ໃກ້ຕິດລົດມ້າຄັນນີ້ໄປ. [30] ຟີລິບຈຶ່ງແລ່ນຫຍັບເຂົ້າໄປໃກ້ ແລະ ໄດ້ຍິນເພິ່ນກຳລັງອ່ານໜັງສືຂອງຜູ້
ທຳນວາຍເອຊາຢາຢູ່ ຟີລິບຈຶ່ງຖາມເພິ່ນວ່າ, “ທີ່ທ່ານອ່ານຢູ່ນັ້ນທ່ານເຂົ້າໃຈບໍ?” [31] ຂ້າຣາຊການຜູ້ນີ້
ຕອບວ່າ, “ຂ້ອຍຈະເຂົ້າໃຈໄດ້ຢ່າງໃດ? ຖ້າບໍ່ມີຜູ້ໃດອະທິບາຍສູ່ຂ້ອຍຟັງ?” ແລ້ວເພິ່ນກໍເຊີນຟີລິບຂຶ້ນ
ນັ່ງລົດມ້າໄປກັບເພິ່ນ.

[35] ແລ້ວຟີລິບກໍອອກປາກກ່າວ ໂດຍເລີ່ມແຕ່ພຣະຄຳພີຕອນນີ້ໄປ ແລະ ກໍບອກເພິ່ນເຖິງຂ່າວປະເສີດ
ເລື່ອງພຣະເຢຊູເຈົ້າ. [36] ເມື່ອພວກເພິ່ນໄດ້ເດີນທາງມາເຖິງບ່ອນມີນໍ້າບ່ອນໜຶ່ງ ຂ້າຣາຊການຜູ້ນີ້ກໍ
ກ່າວວ່າ, “ທີ່ນີ້ມີນໍ້າ ມີສິ່ງໃດບໍທີ່ຂັດຂວາງຂ້ອຍບໍ່ໃຫ້ຮັບບັບຕິສະມາ?” [38] ແລ້ວຂ້າຣາຊການກໍສັ່ງໃຫ້
ຢຸດລົດມ້າ ເພິ່ນກັບຟີລິບຈຶ່ງລົງໄປໃນນໍ້າ ແລະຟີລິບກໍໃຫ້ເພິ່ນຮັບບັບຕິສະມາ. [39] ເມື່ອທັງສອງຂຶ້ນມາ
ຈາກນໍ້າແລ້ວ ພຣະວິນຍານຂອງອົງພຣະຜູ້ເປັນເຈົ້າ ກໍຮັບເອົາຟີລິບໄປ ສ່ວນຂ້າຣາຊການຄົນນັ້ນ ກໍບໍ່
ເຫັນຟີລິບຕໍ່ໄປອີກ ເພິ່ນຈຶ່ງເດີນທາງເມືອດ້ວຍຄວາມຊົມຊື່ນຍິນດີຢ່າງເຕັມລົ້ນ.

### ອ່ານເພີ່ມຕື່ມ:

### ເພງສັນລະເສີນ 119:105; ສຸພາສິດ 3:5-6; ກິດຈະການ 9:10 -19; ກິດຈະກຳ 16:6-10

ກິດຈະການ 8, ພຣະເຈົ້າໄດ້ໃຊ້ຟີລິບ ອອກໄປເພື່ອສຳແດງການອັດສະຈັນ ແລະ ປະກາດຂ່າວປະເສີດ ໃນເມືອງຊາມາເຣຍ (ຂໍ້ທີ 4-25 ). ໝາຍສຳຄັນ, ການອັດສະຈັນ ແລະ ຂ່າວປະເສີດໄດ້ເຮັດໃຫ້ຫຼາຍຄົນໄດ້ກັບໃຈໃໝ່ ແລະ ເຮັດໃຫ້ພວກເຂົາໄດ້ພົບໝາຍສຳຄັນ ແລະ ລິດອຳນາດຂອງພຣະເຈົ້າຊັດເຈນ. ຫຼັງຈາກ

ພັນທະກິດທີ່ຟີລິບໄດ້ເຮັດ ເກີດດອກອອກຜົນ, ເຮົາອາດຈະຄິດວ່າພຣະອົງຈະນຳພາຟີລິບໄປຢູ່ໃນເມືອງໃຫຍ່ ຫຼື ພົບຄົນກຸ່ມໃຫຍ່ຂຶ້ນ, ແຕ່ນັ້ນບໍ່ແມ່ນສິ່ງເກີດຂຶ້ນ.

ພຣະເຈົ້າຊົງນຳຟີລິບໄປໃນທາງທີ່ປ່ຽວ ແລະ ບໍ່ມີຄົນທຽວທາງ. ຈາກຂໍ້ທີ 26, ເມືອງກາຊາເປັນເມືອງທະເລຊາຍທີ່ຄົນບໍ່ທຽວທາງນັ້ນ.

ຟີລິບໄດ້ອອກຈາກເມືອງຊາມາເຣຍດ້ວຍເວລາທີ່ເກີດຜົນ. ຫຼັງຈາກນັ້ນ, ລາວກໍຖືກສົ່ງໄປບ່ອນທີ່ບໍ່ມີຄົນທຽວທາງ, ບ່ອນທີ່ບໍ່ມີຊື່ສຽງ. ຟັງເບິ່ງຄືບໍ່ສົມເຫດສົມຜົນ, ແຕ່ການຊົງນຳຂອງພຣະເຈົ້າແມ່ນເໜືອກົດເກນຂອງມະນຸດ. ເມື່ອຟີລິບຕັດສິນໃຈຕິດຕາມການຊົງນຳຂອງພຣະອົງ, ພຣະເຈົ້າກໍໄດ້ນຳພາລາວໄປເຊິ່ງເໜືອກວ່າສິ່ງທີ່ລາວສາມາດວາງແຜນດ້ວຍຕົນເອງ.

ຫຼາຍຄົນຕ້ອງໄດ້ຕັດສິນໃຈຢູ່ທຸກໆມື້ບໍ່ວ່າຈະເປັນເລື່ອງນ້ອຍ ແລະ ເລື່ອງໃຫຍ່ກໍຕາມ. ມັນຈະເປັນແນວໃດຖ້າເຈົ້າຂໍໃຫ້ພຣະເຈົ້າເປີດເຜີຍແຜນການຂອງພຣະອົງທີ່ມີໄວ້ສຳລັບຊີວິດຂອງເຈົ້າໄດ້? ພຣະອົງຈະສົ່ງເຈົ້າໄປໃສ? ເຈົ້າຈະພົບກັບໃຜ ແລະ ພຣະອົງຈະເຮັດສຳເລັດແນວໃດຜ່ານຊີວິດເຈົ້າ?

ໃນບົດນີ້, ພຣະເຈົ້າຊົງນຳຟີລິບອອກຈາກຝູງຊົນເພື່ອໄປຊອກຫາຄົນໃດຄົນໜຶ່ງ. ລາວບໍ່ພຽງແຕ່ໄດ້ພົບກັບຂ້າຣາຊການຊັ້ນສູງໃນທາງທີ່ບໍ່ມີຄົນທຽວ, ແຕ່ພຣະເຈົ້າຍັງໄດ້ປະທານສະຕິປັນຍາໃຫ້ແກ່ຟີລິບເພື່ອອະທິບາຍພຣະຄຳໃຫ້ແກ່ຂ້າຣາຊການຜູ້ນັ້ນ. ພຣະເຈົ້າອົງເປັນຜູ້ຕົ້ນ ແລະ ຜູ້ປາຍ ຊົງນຳເຮົາໃຫ້ເປັນພິຍານທີ່ເກີດຜົນໃນບ່ອນທີ່ພຣະອົງສົ່ງເຮົາອອກໄປ.

ຂ້າຣາຊການຊາວເອທິໂອເປຍ, ຜູ້ມີອິດທິພົນ ໄດ້ຮັບການຊົງນຳຈາກຄົນທີ່ລາວບໍ່ຮູ້ຈັກ, ໃນບ່ອນທີ່ລາວບໍ່ຮູ້ຈັກ. ຄວາມຈິງ, ປະຫວັດສາດກ່າວວ່າ ລາວໄດ້ນຳເອົາຂ່າວປະເສີດທີ່ລາວໄດ້ພົບນັ້ນກັບບ້ານໄປນຳ, ລາວໄດ້ແບ່ງປັນໃຫ້ກັບຫຼາຍຄົນເປັນວົງກ້ວາງໃນເມືອງ ແລະ ໃນປະເທດຂອງລາວ. ແຜນການຂອງພຣະເຈົ້າທີ່ມີສຳລັບຊີວິດຂອງເຮົາແມ່ນເໜືອກວ່າແຜນການທີ່ເຮົາມີໄວ້ສຳລັບຕົນເອງ. ເມື່ອເຮົາອະນຸຍາດໃຫ້ພຣະເຈົ້າຊົງນຳເຮົາ, ພຣະອົງຈະນຳເຮົາໄປຢູ່ໃນສະຖານະການທີ່ເຮົາບໍ່ຄາດຄິດ ເພື່ອເຮັດໃຫ້ສຳເລັດຕາມພຣະປະສົງຂອງພຣະອົງໃນໂລກນີ້.

ຜ່ານການຊົງນຳອັນອັດສະຈັນນີ້, ພຣະເຈົ້າໄດ້ໃຫ້ທິດທາງ ແລະ ຄຳເວົ້າທີ່ເຮົາຈຳເປັນເມື່ອເຮົາຕ້ອງການມັນທຸກຄັ້ງ.

## ທວນຄືນເວລາທີ່ຜ່ານມາທີ່ພຣະເຈົ້າໄດ້ຊົງນຳເຈົ້າໃນການຕັດສິນໃຈ.

. . . . . . . . . . . . . . . . . . . . . . . . . .

. . . . . . . . . . . . . . . . . . . . . . . . . .

**ພາກສ່ວນໃດ ຫຼື ສະຖານະການໃດໃນຊີວິດຂອງເຈົ້າຕອນນີ້ທີ່ຕ້ອງການການຊີ້ນຳຂອງພຣະເຈົ້າ?**

. . . . . . . . . . . . . . . . . . . . . . . . . .

. . . . . . . . . . . . . . . . . . . . . . . . . .

ຂ້າແດ່ພຣະບິດາເຈົ້າ, ພຣະອົງຊົງເປັນຜູ້ຕົ້ນ ແລະ ຜູ້ປາຍ, ພຣະເຈົ້າຜູ້ຊົງດຳລົງຢູ່ເປັນນິດ ພຣະອົງວາງແຜນເລື່ອງຕ່າງໆໃນຊີວິດຂອງລູກ ແລະ ຮູ້ວັນເວລາຂອງລູກກ່ອນທີ່ລູກຈະເກີດມາ. ຂໍພຣະອົງຊົງນຳ ແລະ ປະທານຄວາມໝັ້ນໃຈໃຫ້ແກ່ລູກເພື່ອເດີນໃນທາງຂອງພຣະອົງ ແລະ ເຮັດສຳເລັດຕາມພຣະປະສົງຂອງພຣະອົງທຸກຢ່າງ. ຂໍພຣະອົງຊົງຊ່ວຍໃຫ້ລູກໄດ້ຍິນສຽງຂອງພຣະອົງ ແລະ ເຊື່ອຟັງພຣະອົງດ້ວຍ. ຂອບຄຸນພຣະເຈົ້າສຳລັບພຣະຄຸນຂອງພຣະອົງ ແລະ ພຣະຄຳຂອງພຣະອົງທີ່ໄດ້ເປັນແສງສະຫວ່າງນຳທາງໃຫ້ກັບລູກ ເມື່ອລູກເຮັດຜິດພາດໄປ. ຂໍຊົງໂຜດນຳພາລູກ ແລະ ຊ່ວຍໃຫ້ລູກໄດ້ໃຊ້ຊີວິດຢູ່ເພື່ອພຣະປະສົງຂອງພຣະອົງດ້ວຍ. ອະທິຖານໃນນາມພຣະເຢຊູຄຣິສ, ອາແມນ.

# ມື້ທີ 5

# ການປົດປ່ອຍ

## ກິດຈະການ 16:25-32

[25]ປະມານທ່ຽງຄືນ ໂປໂລ ແລະ ຊີລາ ກໍພາກັນພາວັນນາອະທິຖານ ຮ້ອງເພງສັນລະເສີນພຣະເຈົ້າ,
ພວກນັກໂທດຄົນອື່ນໆກໍຟັງທ່ານທັງສອງຢູ່. [26]ໃນທັນໃດນັ້ນ ກໍເກີດມີແຜ່ນດິນຫວັ່ນໄຫວອັນໃຫຍ່ ຈົນ
ເຮັດໃຫ້ຮາກຖານຂອງຄຸກສະທ້ານສະເທືອນ, ປະຕູຄຸກທຸກບານໄຂອອກໃນທັນທີ ແລະ ສາຍໂສ້ທຸກ
ສາຍທີ່ລ່າມນັກໂທດທຸກຄົນກໍຫຼຸດອອກ. [27]ເມື່ອເຈົ້າໜ້າທີ່ຕື່ນຂຶ້ນ ແລະ ເຫັນວ່າປະຕູຄຸກທຸກບານໄຂຢູ່
ຈຶ່ງຄິດວ່ານັກໂທດທຸກຄົນປົບໜີໄປແລ້ວ. ດັ່ງນັ້ນ ລາວຈຶ່ງຊັກດາບຂອງຕົນອອກ ແລະ ກຳລັງຈະຂ້າຕົວ
ເສຍ. [28]ແຕ່ໂປໂລຮ້ອງຈົນສຸດສຽງວ່າ, "ຢ່າເຮັດຮ້າຍໃຫ້ຕົນເອງ ພວກເຮົາຍັງຢູ່ທີ່ນີ້ໝົດທຸກຄົນ."
[29]ເຈົ້າໜ້າທີ່ຈຶ່ງສັ່ງໃຫ້ຄົນເອົາໂຄມໄຟມາເຍືອງ ແລ້ວກໍຟ້າວແລ່ນເຂົ້າໄປຫາທັງຕົວສັ່ນເຊັນ ແລະ ຂາບ
ລົງທີ່ຕີນຂອງໂປໂລ ແລະ ຊີລາ. [30]ແລ້ວໄດ້ພາທ່ານທັງສອງອອກມາ ແລ້ວຖາມວ່າ, "ທ່ານເອີຍ
ຂ້ານ້ອຍຈະຕ້ອງເຮັດຢ່າງໃດຈຶ່ງຈະໄດ້ລອດພົ້ນ?" [31]ພວກເພິ່ນຕອບວ່າ, "ຈົ່ງເຊື່ອໃນອົງພຣະເຢຊູເຈົ້າ
ແລ້ວເຈົ້າກັບຄອບຄົວຂອງເຈົ້າກໍຈະໄດ້ພົ້ນ." [32]ແລ້ວທ່ານທັງສອງກໍກ່າວພຣະທຳຂອງອົງພຣະຜູ້ເປັນ
ເຈົ້າສູ່ລາວຟັງ ພ້ອມກັບທຸກຄົນທີ່ຢູ່ໃນເຮືອນຂອງລາວ.

### ອ່ານເພີ່ມຕື່ມ:

ເພງສັນລະເສີນ 150:1-6; ໂກໂລຊາຍ 3:16; ເພງສັນລະເສີນ 28:1-9;
ອົບພະຍົບ 14:13-22

ໂປໂລ ແລະ ຊີລາ ຖືກຂັງຄຸກ ຍ້ອນການຮັບໃຊ້ໃນ ເມືອງຟີລິບປີ. ທັງສອງຖືກທຸບຕີ ແລະ ຖືກກັກໂຕໄວ້ໃນຫ້ອງຂັງ, ທັງສອງຖືກລ່າມໂສ້ໄວ້ກັບພື້ນ, ອ້ອມຮອບໄປດ້ວຍນັກໂທດຄົນອື່ນໆ. ຍ້ອນຄຸກທີ່ພວກເຂົາຢູ່ບໍ່ມີປ່ອງຢ້ຽມເລີຍເຮັດໃຫ້ພວກເຂົາຖືກຂັງໄວ້ໃນຫ້ອງມືດໝົດມື້ໂດຍບໍ່ຮູ້ກາງເວັນກາງຄືນ. ສະນັ້ນ, ທັນໃດນັ້ນເມື່ອເຖິງເວລາທ່ຽງຄືນ ພວກເຂົາກໍໄດ້ຍິນສຽງສາຍໂສ້ທີ່ລ່າມນັກໂທດໄວ້ດັ່ງສະນັ່ນຫວັ່ນໄຫວ.

ຄຣິສຕຽນຫຼາຍຄົນທົ່ວໂລກທຸກມື້ນີ້ຍັງພົບກັບການຂົ່ມເຫັງ ແລະ ການຕິດຄຸກ ຍ້ອນຄວາມເຊື່ອເຊັ່ນກັນ. ບາງຄົນອາດຈະບໍ່ພົບກັບການທາລຸນທາງຮ່າງກາຍ, ແຕ່ຖືກທາລຸນທາງອາລົມຄວາມຮູ້ສຶກ ຫຼື ທາງຈິດໃຈ. ເຮົາທຸກຄົນໄດ້ຜ່ານຊ່ວງເວລາທີ່ໝົດຫວັງໃນຊີວິດ ທີ່ເຮົາບໍ່ສາມາດເອົາຊະນະດ້ວຍຕົວເຮົາເອງໄດ້. ແຕ່ໃນຊ່ວງເວລາທີ່ມືດມົວເຊັ່ນນີ້, ພຣະເຈົ້າກໍຍັງໄດ້ພົບກັບເຮົາຢ່າງໜ້າອັດສະຈັນສະເໝີ.

ເມື່ອໂປໂລ ແລະ ຊີລາ ເລືອກທີ່ຈະໄວ້ວາງໃຈພຣະເຈົ້າ ໃນທ່າມກາງສະຖານະການທີ່ພວກເຂົາກຳລັງພົບ, ໂສ້ລ່າມຂອງນັກໂທດໄດ້ຖືກປົດອອກ. ບໍ່ພຽງແຕ່ເທົ່ານັ້ນ, ການອັດສະຈັນທີ່ເກີດຂຶ້ນຍັງເຮັດໃຫ້ເຈົ້າໜ້າທີ່ຍັງໄດ້ຮັບການປົດປ່ອຍອີກດ້ວຍ.

ຫຼັງຈາກທີ່ເຈົ້າໜ້າທີ່ໄດ້ເຫັນການອັດສະຈັນນີ້ ແລະ ເຫັນນັກໂທດຍັງຢູ່ໃນຫ້ອງຂັງ, ລາວຈຶ່ງໄດ້ຖາມໂປໂລ ແລະ ຊີລາວ່າ, "ທ່ານເອີຍ ຂ້ານ້ອຍຈະຕ້ອງເຮັດຢ່າງໃດຈຶ່ງຈະໄດ້ລອດພົ້ນ?" ເຈົ້າໜ້າທີ່ໄດ້ເຫັນລິດອຳນາດ ແລະ ຄວາມຮັກຂອງພຣະເຈົ້າດ້ວຍຕົວເອງ. ການອັດສະຈັນນີ້ໄດ້ນຳເອົາການປ່ຽນແປງຢ່າງຖາວອນມາສູ່ຊີວິດຂອງລາວ ແລະ ຄອບຄົວຂອງລາວ. ມັນໄດ້ເປີດໂອກາດໃຫ້ສະມາຊິກຄອບຄົວຂອງລາວໄດ້ຮັບຂອງປະທານແຫ່ງຄວາມລອດພົ້ນເຊັ່ນກັນ. ພຣະເຈົ້າມີລິດອຳນາດທີ່ຈະປົດປ່ອຍພວກເຮົາທັງຝ່າຍຮ່າງກາຍ ແລະ ຝ່າຍຈິດວິນຍານ.

ສິ່ງທີ່ໜ້າອັດສະຈັນໄປກວ່ານັ້ນກໍຄືເມື່ອເຮົາສືບຕໍ່ອ່ານເລື່ອງນີ້ຕໍ່ໄປ, ເຮົາຈະເຫັນວ່າພຣະວິນຍານບໍລິສຸດໄດ້ປົດປ່ອຍໂປໂລ ແລະ ຊີລາ ໃນຕອນເຊົ້າມື້ຕໍ່ມາ. ເຖິງແມ່ນວ່າເຮົາຈະຕົກຢູ່ໃນສະຖານະການທີ່ເບິ່ງຄືວ່າເປັນໄປບໍ່ໄດ້ ແຕ່ພຣະເຈົ້າບໍ່ເຄີຍລືມພວກເຮົາ. ເມື່ອໂປໂລ ແລະ ຊີລາ ໄວ້ວາງໃຈໃນພຣະເຈົ້າ, ພຣະອົງບໍ່ພຽງແຕ່ປົດປ່ອຍພວກເຂົາອອກຈາກຄຸກ, ແຕ່ພຣະອົງຍັງຊົງໃຊ້ພວກເພິ່ນອອກໄປປະກາດຂ່າວປະເສີດໃຫ້ກັບທຸກຄົນ.

**ຫວນຄືນເວລາທີ່ພຣະເຈົ້າໄດ້ຊ່ວຍປົດປ່ອຍເຈົ້າອອກຈາກສະຖານະການທີ່ມືດມົວ ແລະ ສິ້ນຫວັງ. ໃຊ້ເວລານະມັດສະການຂອບພຣະຄຸນພຣະເຈົ້າສຳລັບການປົດປ່ອຍ ແລະ ຄວາມພົ້ນທີ່ເຈົ້າໄດ້ຮັບ.**

........................

........................

**ຍັງມີສ່ວນໃດໃນຊີວິດຂອງເຈົ້າ ທີ່ເຈົ້າຮູ້ສຶກວ່າມັນຍາກທີ່ຈະໄວ້ວາງໃຈພຣະເຈົ້າບໍ່? ອະທິຖານຂໍໃຫ້ພຣະເຈົ້າເສີມສ້າງຄວາມເຊື່ອຂອງເຈົ້າໃຫ້ໄດ້ເຫັນຫົນທາງທີ່ຈະນຳເຈົ້າໄປພົບການຜ່ານຜ່າ.**

........................

........................

ພຣະເຈົ້າ, ບໍ່ມີສິ່ງໃດທີ່ຍາກເກີນໄປສຳລັບພຣະອົງ. ລູກອະທິຖານຂໍໃຫ້ທຸກຄົນທີ່ກຳລັງຕິກຢູ່ໃນສະຖານະການທີ່ມືດມົວ ໄດ້ພົບກັບການປົດປ່ອຍຈາກພຣະອົງ. ລູກອະທິຖານຂໍໃຫ້ພວກເຂົາໄດ້ຮັບການຊ່ວຍໃຫ້ພົ້ນຈາກທຸກສິ່ງທີ່ກຳລັງກັກຂັງພວກເຂົາ ແລະ ຂໍໃຫ້ໂລກນີ້ໄດ້ພົບພຣະຜູ້ຊ່ວຍໃຫ້ພົ້ນທີ່ຍິ່ງໃຫຍ່, ຜ່ານຄຳພິຍານຊີວິດຂອງພວກເຂົາດ້ວຍ. ລູກຍອມຮັບເອົາອິດສະຫຼະພາບຈາກໄຊຊະນະຂອງພຣະເຢຊູ ແລະ ລູກເຊື່ອວ່າພຣະອົງສາມາດນຳອິດສະຫຼະພາບມາສູ່ຈິດວິນຍານ ແລະ ຮ່າງກາຍຂອງລູກ. ອະທິຖານໃນນາມພຣະເຢຊູຄຣິສ, ອາແມນ.

## ບົດສະຫຼຸບ

# ການປົກປ້ອງ

### ກິດຈະການ 28:1-9

[1] ເມື່ອພົ້ນໄພແລ້ວ ພວກເຮົາຈຶ່ງຮູ້ວ່າເກາະນີ້ຊື່ວ່າ ມັນຕາ. [2] ຄົນພື້ນເມືອງໃນທີ່ນີ້ ໄດ້ສະແດງຄວາມ
ເປັນມິດແກ່ພວກເຮົາຢ່າງດີທີ່ສຸດ ຝົນກໍໄດ້ຕົກ ແລະ ອາກາດກໍໜາວ. ດັ່ງນັ້ນ ພວກເຂົາຈຶ່ງດັງໄຟ
ຕ້ອນຮັບພວກເຮົາທັງໝົດ. [3] ໂປໂລເກັບເອົາຫຼືອມັດໜຶ່ງມາສຸມໃສ່ໄຟ ແຕ່ເພາະຄວາມຮ້ອນຈຶ່ງມີງູພິດ
ໂຕໜຶ່ງ ອອກມາຈາກຫຼືອນັ້ນຂົບມືໂປໂລຫ້ອຍຢູ່. [4] ເມື່ອຊາວພື້ນເມືອງຂອງເກາະນີ້ ເຫັນງູຫ້ອຍຢູ່ທີ່ມື
ຂອງໂປໂລ ພວກເຂົາຈຶ່ງເວົ້າກັນວ່າ, “ຄົນນີ້ຄົງເປັນຜູ້ຂ້າຄົນ ເພາະເວນກຳຍັງບໍ່ນຳມາສະໜອງເອົາ
ຊີວິດລາວຢູ່ ເຖິງແມ່ນວ່າລາວພົ້ນຈາກທະເລແລ້ວກໍຕາມ.” [5] ແຕ່ໂປໂລສັ່ນງູໂຕນັ້ນໃຫ້ຕົກໃສ່ໄຟ ແລະ
ຕົນເອງກໍບໍ່ເປັນອັນຕະລາຍແຕ່ປະການໃດ. [6] ພວກເຂົາຕ່າງໆກໍຄອຍເບິ່ງວ່າ ໂປໂລຈະໂຕໃຄ່ບວມຂຶ້ນ ຫຼື
ລົ້ມລົງຕາຍໃນທັນທີ ຫຼື ບໍ່, ແຕ່ຫຼັງຈາກທີ່ຄອຍເບິ່ງດົນນານ ແລະ ບໍ່ເຫັນສິ່ງໃດຜິດປົກກະຕິເກີດຂຶ້ນກັບ
ໂປໂລ ແລ້ວພວກເຂົາກໍປ່ຽນໃຈ ແລະ ເວົ້າວ່າ, “ລາວເປັນພະອົງໜຶ່ງ.” [7] ຢູ່ໃກ້ບ່ອນນັ້ນມີທີ່ດິນ ຊຶ່ງເປັນ
ຂອງປົບລີໂອຫົວໜ້າຊາວພື້ນເມືອງໃນເກາະນີ້, ທ່ານຜູ້ນີ້ໄດ້ຕ້ອນຮັບພວກເຮົາເປັນຢ່າງດີ ແລະ ໄດ້ຮັບ
ພວກເຮົາໄວ້ເປັນແຂກຂອງເພິ່ນເປັນເວລາສາມວັນ. [8] ສ່ວນພໍ່ຂອງປົບລີໂອນັ້ນນອນຢູ່ ເພາະເປັນໄຂ້
ແລະ ເປັນທ້ອງບິດ, ໂປໂລຈຶ່ງເຂົ້າໄປເບິ່ງທີ່ຫ້ອງນອນຂອງເພິ່ນ ແລະ ໄດ້ພາວັນນາອະທິຖານ ແລະ
ວາງມືໃສ່ເພິ່ນແລ້ວເພິ່ນກໍຫາຍດີ. [9] ເມື່ອເຫດການເປັນໄປຢ່າງນີ້ ຊາວພື້ນເມືອງທຸກຄົນໃນເກາະນັ້ນ ທີ່
ເຈັບໄຂ້ໄດ້ປ່ວຍ ຕ່າງກໍມາຫາໂປໂລ ແລະ ພວກເຂົາກໍໄດ້ຫາຍດີທຸກຄົນ.

### ອ່ານເພີ່ມຕື່ມ:

ຈົດບັນຊີ 21:6-9; ເພງສັນລະເສີນ 91:13-15; ດານີເອນ 6:1-22

ດັ່ງທີ່ພວກເຮົາກຳລັງຈະສິ້ນສຸດການອະທິຖານ ແລະ ຖືສິນອົດອາຫານໃນອາທິດນີ້, ພວກເຮົາກໍໄດ້ເຫັນການອັດສະຈັນຫຼາຍຢ່າງໃນພຣະຄຳກິດຈະການ. ການອັດສະຈັນທີ່ເກີດຂຶ້ນແມ່ນເພື່ອເຮັດໃຫ້ຈຸດປະສົງຂອງພັນທະກິດຂອງພຣະເຈົ້າສຳເລັດເພື່ອເຮັດໃຫ້ພວກເຮົາໄດ້ຮູ້ຈັກພຣະເຈົ້າ ແລະ ເຮັດໃຫ້ນາມຊື່ຂອງພຣະອົງເປັນທີ່ຮູ້ຈັກ.

ແຕ່ເມື່ອເຈົ້າໃຊ້ຊີວິດໃນຖານະທີ່ເປັນຜູ້ຕິດຕາມພຣະເຢຊູໃນພັນທະກິດຂອງພຣະເຈົ້າ, ເຈົ້າກໍຈະຖືກຈັບຕາຈາກຝ່າຍກົງກັນຂ້າມ. ການອັດສະຈັນໃນການປົກປ້ອງຂອງພຣະເຈົ້າເຮັດໃຫ້ເຮົາພົບຄວາມສະບາຍໃຈ ແລະ ຄວາມໝັ້ນໃຈໃນການໃຊ້ຊີວິດເພື່ອເຮັດພັນທະກິດພຣະອົງ.

ໃນພຣະຄຳ ກິດຈະການ 28 ກ່າວວ່າ ໃນຂະນະທີ່ ໂປໂລ ເດີນທາງໄປນະຄອນໂຣມ, ເຮືອຂອງລາວກໍແຕກທີ່ເກາະໃນເມືອງມັນຕາ. ລາວໄດ້ຖືກງູຜິດກັດ ແຕ່ກໍ່ລອດຊີວິດມາໄດ້ຢ່າງອັດສະຈັນ. ມັນຄືກັບທຸກໆການອັດສະຈັນທີ່ເກີດຂຶ້ນມັນໄດ້ສຳແດງໃຫ້ເຮົາເຫັນ ແລະ ມັນແມ່ນຄວາມຕັ້ງໃຈຂອງພຣະເຈົ້າ. ທຸກໆການອັດສະຈັນພຣະເຈົ້າມີເຫດຜົນທີ່ເຮັດໃຫ້ມັນເກີດຂຶ້ນ. ພຣະເຈົ້າໄດ້ປົກປ້ອງ ໂປໂລ ແລະ ນັ້ນເປັນການເລີ່ມຕົ້ນຂອງພຣະເຈົ້າທີ່ທຳງານໃນເມືອງມັນຕາ. ໂປໂລ ກໍໄດ້ເດີນທາງຕໍ່ໄປ ແລະ ໄດ້ປິ່ນປົວພໍ່ຂອງປັບລີໂອ ແລະ ຊາວພື້ນເມືອງທຸກຄົນໃນເກາະນັ້ນກໍໄດ້ຫາຍດີທຸກຄົນ ດ້ວຍການສຳແດງລິດເດດຂອງພຣະເຈົ້າ ແລະ ປະກາດຂ່າວປະເສີດ.

ພຣະເຈົ້າບໍ່ພຽງແຕ່ປົກປ້ອງ ໂປໂລ ຈາກການຖືກງູຜິດກັດ, ການຮັກສາທີ່ພຣະເຈົ້ານຳມາເຖິງຊີວິດຂອງຄົນໃນ ເກາະມັນຕາໄດ້ເຮັດໃຫ້ທຸກຄົນໄດ້ເຫັນເຖິງພຣະສະຫງ່າລາສີຂອງພຣະເຈົ້າ. ຈາກນັ້ນ ໂປໂລ ກໍ່ສືບຕໍ່ເດີນທາງໄປທີ່ນະຄອນໂຣມ ດ້ວຍຄວາມໄວ້ວາງໃຈໃນການປົກປ້ອງຈາກພຣະເຈົ້າ ແລະປະກາດຂ່າວປະເສີດດ້ວຍຄວາມກ້າຫານ ແລະ ບໍ່ມີອຸປະສັກ.

ເມື່ອເຮົາໃຊ້ຊີວິດໃນຖານະທີ່ເປັນຜູ້ຕິດຕາມພຣະເຢຊູ, ເຮົາຈະຖືກຈັບຕາຈາກຄົນທີ່ຕໍ່ຕ້ານພຣະອົງ, ແຕ່ພວກເຮົາສາມາດຂໍການປົກປ້ອງຈາກພຣະເຈົ້າ. ພຣະເຈົ້າປົກປ້ອງເຮົາຈາກການປ້ອງຮ້າຍຂອງສັດຕູເຊັ່ນດຽວກັນກັບທີ່ປົກປ້ອງໂປໂລຈາກງູຜິດ. ພຣະອົງຊົງຢູ່ກັບເຮົາ. ສະນັ້ນ, ພວກເຮົາຈິ່ງສາມາດດຳລົງຊີວິດທີ່ຈະຮູ້ຈັກພຣະອົງ ແລະ ເຮັດໃຫ້ພຣະນາມຂອງພຣະອົງເປັນທີ່ຮູ້ຈັກ.

ດ້ວຍການຂອບພຣະຄຸນພຣະເຈົ້າ, ຕຶກຕອງເຖິງເວລາທີ່ພຣະເຈົ້າໄດ້ປົກປ້ອງເຈົ້າຈາກສະຖານະການທີ່ອັນຕະລາຍ.

## ມີພາກສ່ວນໃດໃນຊີວິດຂອງເຈົ້າທີ່ເຈົ້າກຳລັງໄວ້ວາງໃຈພຣະເຈົ້າສຳລັບການອັດສະຈັນບໍ່?

........................

........................

**ໃຊ້ເວລາຕຶກຕອງແລະຂອບຄຸນພຣະເຈົ້າສຳລັບຄວາມຮັກ ແລະ ລິດອຳນາດຂອງພຣະອົງ.**

........................

........................

ພຣະເຈົ້າ, ຂອບຄຸນພຣະອົງທີ່ໄດ້ນຳເອົາການອັດສະຈັນດ້ວຍລິດເດດເຂົ້າມາໃນໂລກນີ້. ຂອບຄຸນພຣະອົງສຳລັບຂອງປະທານ ແລະ ລິດເດດອຳນາດຂອງພຣະວິນຍານບໍລິສຸດຂອງພຣະອົງແກ່ລູກ. ພຣະເຈົ້າຊົງເປັນຜູ້ຮັກສາ, ຜູ້ຈັດຕຽມ, ຜູ້ນຳພາ, ຜູ້ປົດປ່ອຍ ແລະ ເປັນຜູ້ປົກປ້ອງໃນຍາມທີ່ລູກຕ້ອງການ. ພຣະອົງຊົງສຳແດງຄວາມຮັກຂອງພຣະອົງດ້ວຍການອັດສະຈັນ ແລະ ເປີດຕາລູກໃຫ້ໄດ້ເຫັນການທຳງານຂອງພຣະອົງ. ໂຜດປະທານຄວາມກ້າຫານໃຫ້ແກ່ລູກດ້ວຍເພື່ອເປັນພິຍານແກ່ໂລກນີ້ ແລະ ປະກາດຂ່າວປະເສີດເລື່ອງພຣະອົງ. ຂອບຄຸນພຣະເຈົ້າທີ່ຢູ່ກັບລູກ ໃນຂະນະທີ່ລູກໄດ້ດຳເນີນຊີວິດໃນພັນທະກິດກັບພຣະອົງ. ອະທິຖານໃນນາມພຣະເຢຊູຄຣິສ, ອາແມນ.

# ການອົດສະຈັນ

EVERY NATION

Every Nation is a global family of churches and ministries that exists to honor God by establishing Christ-centered, Spirit-empowered, socially responsible churches and campus ministries in every nation.

**#ENfast2023**
**EveryNation.org/Fasting**